ສຽງຂອງສະພາແຫ່ງຊາດ

# ຜູ້ແທນປະຊາຊົນ
PHOUTHEN PASAXON

ສຳນັກງານຕັ້ງຢູ່ອາລາມລະບະເລຂາທິການສະພາແຫ່ງຊາດ, ໂທ: 021 840 430 email: phouthen.na@gmail.com; www.na.gov.la; app: Lao na

17-24 ກໍລະກົດ 2025
ປີທີ 14
ສະບັບທີ 1026
ລາຍສັປະດາ

## ຮຽບຮຽງເນື້ອໃນກົດໝາຍພະນັກງານໄອຍະການ ແລະ ບາງມາດຕາຂອງກົດໝາຍສານປະຊາຊົນ




(ສພຊ) - ເພື່ອພ້ອມກັນຄົ້ນຄວ້າ, ພິຈາລະນາ ບັນດາຄຳເຫັນຂອງສະມາຊິກສະພາແຫ່ງຊາດ ທີ່ປະກອບຄຳເຫັນກວມເອົາຊື່, ໂຄງປະກອບ ແລະ ເນື້ອໃນກົດໝາຍ; ໃນວັນທີ 7-8 ກໍລະກົດ 2025 ທີ່ເມືອງວັງວຽງ ໄດ້ມີກອງປະຊຸມຮຽບຮຽງເນື້ອໃນກົດໝາຍວ່າດ້ວຍພະນັກງານໄອຍະການ (ສ້າງໃໝ່) ແລະກົດໝາຍວ່າດ້ວຍການປັບປຸງບາງມາດຕາຂອງກົດໝາຍວ່າດ້ວຍສານປະຊາຊົນ ໂດຍການເປັນປະທານຂອງທ່ານ ປອ. ນາງ ສູນທອນ ໄຊຍະຈັກ ຮອງປະທານສະພາແຫ່ງຊາດ; ເຂົ້າຮ່ວມມີທ່ານ ນາງ ທຸມມາລີ ວົງພະຈັນ ປະທານກຳມາທິການຍຸຕິທຳ, ຮອງຫົວໜ້າອົງການໄອຍະການປະຊາຊົນສູງສຸດ, ຮອງປະທານສານປະຊາຊົນສູງສຸດ, ຮອງປະ

ອ່ານຕໍ່ໜ້າ 3

## ສຳເລັດກອງປະຊຸມສະໄໝສາມັນເທື່ອທີ 9 ສປນວ ຊຸດທີ II




(ສພຊ) - ພາຍຫຼັງດຳເນີນມາເປັນເວລາ 4 ວັນເຄິ່ງ ທີ່ສຳນັກງານປົກຄອງນະຄອນຫຼວງວຽງຈັນ, ກອງປະຊຸມສະໄໝສາມັນເທື່ອທີ 9 ຂອງສະພາປະຊາຊົນນະຄອນຫຼວງວຽງຈັນ (ສປນວ) ຊຸດທີ II ໄດ້ປິດລົງດ້ວຍຜົນສຳເລັດຢ່າງຈົບງາມ ໃນວັນທີ 11 ກໍລະກົດຜ່ານມາ ໂດຍການເປັນປະທານຂອງທ່ານ

ອ່ານຕໍ່ໜ້າ 3

## ຮຽບຮຽງເນື້ອໃນປະຫວັດ 50 ປີ ສະພາແຫ່ງຊາດ



(ສພຊ) - ກອງປະຊຸມຮຽບຮຽງເນື້ອໃນປະຫວັດ 50 ປີ ຂອງສະພາແຫ່ງຊາດ ໄດ້ຈັດຂຶ້ນໃນວັນທີ 7-9 ກໍລະກົດ 2025 ທີ່ເມືອງແກ້ວອຸດົມແຂວງວຽງຈັນ ໂດຍການເປັນປະທານຂອງທ່ານ ສຈ. ປອ. ຈະເລີນ ເຢຍປາວເຮີ ຮອງປະທານສະພາແຫ່ງຊາດ, ຫົວໜ້າຄະນະຮັບຜິດຊອບຄົ້ນຄວ້າ ແລະ ຮຽບຮຽງປະຫວັດຂອງສະພາແຫ່ງຊາດ, ມີທ່ານ ສຸບັນ ສະວະບຸດ ປະທານກຳມາທິການວຽກງານສະມາຊິກສະພາແຫ່ງຊາດ, ຮອງຫົວໜ້າຄະນະຮັບຜິດຊອບຄົ້ນຄວ້າແລະຮຽບຮຽງປະຫວັດຂອງສະພາແຫ່ງຊາດ ພ້ອມດ້ວຍບັນດາທ່ານໃນຄະນະແລະກອງເລຂາຄະນະດັ່ງກ່າວເຂົ້າຮ່ວມຢ່າງພ້ອມພຽງ.

ທ່ານ ສຈ. ປອ. ຈະເລີນ ເຢຍປາວເຮີ ໄດ້ມີຄຳເຫັນກ່າວເປີດວ່າ: ຈຸດປະສົງ ແລະ ເນື້ອ

ອ່ານຕໍ່ໜ້າ 2



ແນວຄິດປະທານ
### ໄກສອນ ພົມວິຫານ
ຜູ້ນຳທີ່ປະຊາຊົນເຄົາລົບຮັກ

ຢາກປົກປັກຮັກສາສິດເສລີພາບ ປະຊາທິປະໄຕ ຂອງປະຊາຊົນໄດ້, ຕ້ອງສ້າງລະບົບກົດໝາຍ ກົດໝາຍຕ້ອງແມ່ນກົດໝາຍແຫ່ງການຈັດຕັ້ງຂອງສັງຄົມໃໝ່ຢ່າງແທ້ຈິງ, ເປັນຂໍ້ບັງຄັບອັນສັກສິດ ທີ່ຄອບງຳໃນທຸກດ້ານຂອງຊີວິດສັງຄົມ.

(ໄກສອນ ພົມວິຫານ ນິພົນເລືອກເຟັ້ນ ເຫຼັ້ມ IV, ໜ້າ 202)

ລະບົບກົດໝາຍ ຕ້ອງໄດ້ຮັບການປັບປຸງບູລະນະ ແລະ ຕ້ອງໄດ້ຮັບການເຄົາລົບຢູ່ສະເໝີ ອັນນັ້ນເປັນປັດໄຈທີ່ມີຄວາມສຳຄັນທີ່ສຸດ ໃນການເພີ່ມທະວີຄວາມເຂັ້ມແຂງຂອງລັດພວກເຮົາ.

(ໄກສອນ ພົມວິຫານ ນິພົນເລືອກເຟັ້ນ ເຫຼັ້ມ IV, ໜ້າ 202)

ອ່ານຕໍ່ສະບັບໜ້າ




## ກອງປະຊຸມໃຫຍ່ລົດໄຟຄວາມໄວສູງໂລກຄັ້ງທີ 12




(ສພຊ) - ວັນທີ 8 ກໍລະກົດຜ່ານມາ, ທ່ານ ສົມມາດ ພົລເສນາ ຮອງປະທານສະພາແຫ່ງຊາດ ພ້ອມດ້ວຍຄະນະ ໄດ້ເຂົ້າຮ່ວມກອງປະຊຸມໃຫຍ່ລົດໄຟຄວາມໄວສູງໂລກ ຄັ້ງທີ 12 ທີ່ນະຄອນຫຼວງປັກກິ່ງ, ສປຈີນ ເຊິ່ງມີຜູ້ແທນຈາກຫຼາຍກວ່າ 10 ປະເທດ ເຂົ້າຮ່ວມ ລວມເຖິງທ່ານຮອງນາຍົກລັດຖະມົນຕີຈີນ ແລະ ທ່ານຮອງນາຍົກລັດຖະມົນຕີກຽກກິດສະຖານ.

ໃນພິທີເປີດກອງປະຊຸມ, ທ່ານ ສົມມາດ ພົລເສນາ ໄດ້ຂຶ້ນກ່າວຄຳເຫັນເນັ້ນໜັກເຖິງຜົນສຳເລັດຂອງການກໍ່ສ້າງເສັ້ນທາງລົດໄຟລາວ-ຈີນເປັນຄວາມຝັນອັນຍາວນານຂອງປະເທດລາວເຊິ່ງທ່ານໄດ້ກ່າວວ່າ "ພັກ ແລະ ລັດຖະບານລາວ ມີແນວທາງນະໂຍບາຍ ແລະ ຄວາມຫວັງອັນສູງສົ່ງທີ່ຢາກຈະປ່ຽນຂໍ້ຈຳກັດຂອງປະເທດທີ່ບໍ່ມີຊາຍແດນຕິດກັບທະເລ ໃຫ້ກາຍເປັນປະເທດທີ່ເຊື່ອມຈອດກັບບັນດາປະເທດທົ່ວໂລກ." ທ່ານຍັງກ່າວເສີມວ່າ: ສິ່ງນີ້ ແມ່ນສອດຄ່ອງກັບແນວຄິດ "ໜຶ່ງແລວທາງ ໜຶ່ງເສັ້ນທາງ" ຂອງທ່ານເລຂາທິການໃຫຍ່, ປະທານປະເທດສີ ຈິ້ນຜິງ ເຊິ່ງສະແດງເຖິງການຈັດຕັ້ງປະຕິບັດແນວຄວາມຄິດຄູ່ຮ່ວມຊາຕາກຳ ລາວ-ຈີນ ໃຫ້ເກີດດອກອອກຜົນ.

ທ່ານ ສົມມາດ ພົລເສນາ ໄດ້ກ່າວຢ້ຳອີກວ່າ "ເສັ້ນທາງລົດ

ອ່ານຕໍ່ໜ້າ 12

## ສະຫະພັນແມ່ຍິງສະພາແຫ່ງຊາດ ເຂົ້າຮ່ວມສະເຫຼີມສະຫຼອງວັນສ້າງຕັ້ງສະຫະພັນແມ່ຍິງລາວ ຄົບຮອບ 70 ປີ



ອ່ານຕໍ່ໜ້າ 3



ຜັກຕຸມແຕງແຄມຮົ້ວ (ໜ້າ 9)



ຫອງດນາມຜ່ອນຄາຍ... (ໜ້າ 11)




ນະໂຍບາຍ... (ໜ້າ 12)

ຊົມເຊີຍວັນສ້າງຕັ້ງສະຫະພັນແມ່ຍິງລາວ ຄົບຮອບ 70 ປີ (20 ກໍລະກົດ 1955 - 20 ກໍລະກົດ 2025) ຢ່າງສຸດໃຈ!

# ຕິດຕາມກວດກາການປະຕິບັດ ວຽກງານ ປກຊ-ປກສ ຢູ່ສາລະວັນ




(ສພຊ) - ວັນທີ 10 ກໍລະກົດຜ່ານມາ, ທ່ານ ພົຈວ. ປອ. ມາລາ ວິລະຈິດ ຮອງປະທານກຳມາທິການປ້ອງກັນຊາດ-ປ້ອງກັນຄວາມສະຫງົບ (ປກຊ-ປກສ) ພ້ອມດ້ວຍຄະນະ ໄດ້ເຄື່ອນໄຫວຕິດຕາມກວດກາການຈັດຕັ້ງປະຕິບັດບາງວຽກງານໃນຂົງເຂດ ປກຊ-ປກສ ຢູ່ແຂວງສາລະວັນ ໂດຍການຕ້ອນຮັບ ແລະ ຮ່ວມເຮັດວຽກຂອງທ່ານ ສີເຮັງ ຫອມສົມບັດ ຮອງເລຂາພັກແຂວງ, ປະທານສະພາປະຊາຊົນແຂວງ (ສພຂ) ເຊິ່ງມີຮັກສາການປະທານຄະນະກຳມະການຍຸຕິທຳ ແລະ ປກຊ-ປກສ, ພາກສ່ວນທີ່ກ່ຽວຂ້ອງຂອງແຂວງ ແລະ ສພຂ ເຂົ້າຮ່ວມ.

ທັງນີ້, ກໍເພື່ອຕິດຕາມກວດກາການຈັດຕັ້ງປະຕິບັດລັດຖະທຳມະນູນ, ກົດໝາຍ ແລະ ນິຕິກຳໃຕ້ກົດໝາຍ, ການຈັດຕັ້ງປະຕິບັດໜ້າທີ່ການເມືອງຂອງກຳລັງ ປກຊ-ປກສ ແລະ ສະຫະພັນນັກຮົບເກົ່າ, ການແກ້ໄຂຄຳຮ້ອງຂໍຄວາມເປັນທຳແລະສາຍດ່ວນຈາກປະຊາຊົນ ທີ່ພົວພັນເຖິງຂົງເຂດ ປກຊ-ປກສ, ເກັບກຳສະພາບການປະຕິບັດໜ້າທີ່ຂອງເຈົ້າໜ້າທີ່ປກສຢູ່ຄ້າຍຄຸມຂັງດັດສ້າງ, ການຈັດຕັ້ງປະຕິບັດວາລະແຫ່ງຊາດວ່າດ້ວຍການແກ້ໄຂບັນຫາຢາເສບຕິດ ຕາມມະຕິຂອງສະພາແຫ່ງຊາດ, ເກັບກຳສະພາບປາກົດການຫຍໍ້ທໍ້ທີ່ກະທົບເຖິງຄວາມເປັນລະບຽບຮຽບຮ້ອຍທາງສັງຄົມ ແລະ ຄວາມໝັ້ນຄົງຂອງຊາດ, ບັນຫາຢາເສບຕິດ, ການຄ້າມະນຸດ ແລະ ບັນຫາອື່ນໆ ທີ່ເປັນສິ່ງທ້າທາຍຕໍ່ສັງຄົມໃນປັດຈຸບັນ ແລະ ມາດຕະການແກ້ໄຂໃນຕໍ່ໜ້າ ໃຫ້ມີຄວາມຍຸຕິທຳ ແລະ ມີຜົນສັກສິດ.

ຄະນະກຳມະການຍຸຕິທຳ ແລະ ປກຊ-ປກສ ແລະ 4 ພາກສ່ວນທີ່ກ່ຽວຂ້ອງຂອງແຂວງຄື: ກອງບັນຊາການປ້ອງກັນຄວາມສະຫງົບ, ກອງບັນຊາການທະຫານ, ສະຫະພັນນັກຮົບເກົ່າແລະຫ້ອງການ ປກຊ-ປກສ ໄດ້ລາຍງານສະພາບການຈັດຕັ້ງປະຕິບັດວຽກງານ 6 ເດືອນຕົ້ນປີ ແລະ ທິດທາງແຜນການ 6 ເດືອນທ້າຍປີ 2025; ຈາກນັ້ນ, ໄດ້ພ້ອມກັນສົນທະນາ, ແລກປ່ຽນຄຳຄິດເຫັນ ເພື່ອຊອກໃຫ້ເຫັນດ້ານດີທີ່ຄວນເສີມຂະຫຍາຍ, ຊຸກຍູ້ສົ່ງເສີມ ແລະ ດ້ານອ່ອນຂໍ້ຄົງຄ້າງທີ່ຈະຕ້ອງຊອກຫາວິທີການແກ້ໄຂ.

ຮອງປະທານກຳມາທິການ ປກຊ-ປກສ ພ້ອມດ້ວຍຄະນະ ຍັງລົງຕິດຕາມກວດກາສະຖານທີ່ຕົວຈິງຢູ່ຄ້າຍຄຸມຂັງດັດສ້າງນາໄຊ, ສູນປິ່ນປົວ ແລະ ຟື້ນຟູສຸຂະພາບຜູ້ຕິດຢາເສບຕິດ ຢູ່ບ້ານໜອງບູ່ທົ່ງ ເມືອງສາລະວັນ; ດ່ານປາກຕະພານ ເມືອງລະຄອນເພັງ ໂດຍໄດ້ຮັບຟັງການລາຍງານສະພາບການຈັດຕັ້ງປະຕິບັດວຽກງານໃນໄລຍະຜ່ານມາ ພ້ອມທັງຄຳຄິດເຫັນ ແລະ ຄຳສະເໜີຈາກພາກສ່ວນທີ່ກ່ຽວຂ້ອງເພື່ອເກັບກຳສະພາບຕົວຈິງ, ດ້ານດີ, ຂໍ້ສະດວກແລະຂໍ້ຫຍຸ້ງຍາກໃນການຄຸ້ມຄອງຄ້າຍຄຸມຂັງ-ດັດສ້າງ, ຊີວິດການເປັນຢູ່ຂອງຜູ້ຕ້ອງຫາແລະນັກໂທດ, ສະພາບຊາຍແດນ ເພື່ອເປັນຂໍ້ມູນພື້ນຖານໃນການສັງລວມລາຍງານຕໍ່ຄະນະປະຈຳສະພາແຫ່ງຊາດ.

**(ຈັນທີ ດວງບັນຍາ)**




# ກອງປະຊຸມໃຫຍ່ຜູ້ແທນ ສທໜຊ ຄັ້ງທີ V




(ສພຊ) - ກອງປະຊຸມໃຫຍ່ຜູ້ແທນສະມາຄົມນັກທຸລະກິດໜຸ່ມແຫ່ງຊາດລາວ (ສທໜຊ) ຄັ້ງທີ V ໄດ້ຈັດຂຶ້ນເມື່ອວັນອັງຄານທີ 8 ກໍລະກົດຜ່ານມາ ໂດຍການເປັນປະທານຂອງສະຫາຍຄຳແສນ ສີສະວົງ ປະທານສະມາຄົມນັກທຸລະກິດໜຸ່ມແຫ່ງຊາດລາວ, ສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງທີ 9 ແຂວງຊຽງຂວາງ, ເຂົ້າຮ່ວມມີສະຫາຍມອນໄຊ ລາວມົວຊົ່ງ ກຳມະການສຳຮອງສູນກາງພັກ, ເລຂາຄະນະບໍລິຫານງານສູນກາງຊາວໜຸ່ມປະຊາຊົນປະຕິວັດລາວ ພ້ອມດ້ວຍສະມາຊິກສະມາຄົມນັກທຸລະກິດໜຸ່ມທົ່ວປະເທດ ແລະ ພາກສ່ວນທີ່ກ່ຽວຂ້ອງ.

ກອງປະຊຸມໄດ້ພ້ອມກັນຄົ້ນຄວ້າ, ປະກອບຄຳຄິດຄຳເຫັນ ແລະ ຮັບຮອງເອົາບົດລາຍງານການເມືອງທີ່ສະເໜີໂດຍສະຫາຍນາງສຸວາລີ ຄຳຜຸຍ ວ່າການແທນປະທານສະມາຄົມນັກທຸລະກິດໜຸ່ມແຫ່ງຊາດລາວ ເຊິ່ງໄດ້ຕີລາຄາສູງຜົນງານການຈັດຕັ້ງປະຕິບັດມະຕິກອງປະຊຸມໃຫຍ່ຜູ້ແທນ ສທໜຊ ຄັ້ງທີ IV, ຮັບຮອງເອົາຄາດໝາຍສູ້ຊົນແລະແຜນວຽກຈຸດສຸມຂອງຄະນະບໍລິຫານງານ ສທໜຊ ໃນຕໍ່ໜ້າ, ຮັບຟັງການຜ່ານກົດລະບຽບຂອງສະມາຄົມນັກທຸລະກິດໜຸ່ມແຫ່ງຊາດລາວ ສະໄໝທີ V; ຜູ້ແທນກອງປະຊຸມໄດ້ເຫັນດີເປັນເອກະພາບກັບບົດສຳຫຼວດການນຳພາຂອງຄະນະບໍລິຫານງານ ສທໜຊ ສະໄໝທີ IV ເຊິ່ງເປັນບົດຮຽນອັນສຳຄັນໃຫ້ແກ່ຄະນະບໍລິຫານງານຊຸດຕໍ່ໄປ ໃນການຈັດຕັ້ງນຳພາວຽກງານຂອງສະມາຄົມ.

ຜູ້ແທນກອງປະຊຸມໄດ້ປ່ອນບັດເລືອກຕັ້ງເອົາຄະນະບໍລິຫານງານສະມາຄົມນັກທຸລະກິດໜຸ່ມແຫ່ງຊາດລາວ ສະໄໝທີ V ບົນພື້ນຖານຫຼັກການລວມສູນປະຊາທິປະໄຕ ທັງຖືກຕ້ອງສອດຄ່ອງກັບມາດຕະຖານເງື່ອນໄຂທີ່ກຳນົດໄວ້ ເຊິ່ງມີຜູ້ສະໝັກຮັບເລືອກຕັ້ງ 68 ສະຫາຍ, ຍິງ 29 ສະຫາຍ ແລະ ເລືອກໄດ້ຄະນະບໍລິຫານງານຊຸດທີ V ມີ 63 ສະຫາຍ, ຍິງ 26 ສະຫາຍ; ກອງປະຊຸມຄັ້ງປະຖົມມະລຶກ ເຫັນດີເປັນເອກະພາບເລືອກເອົາສະຫາຍນາງສຸວາລີ ຄຳຜຸຍເປັນປະທານ, ສະຫາຍ ຄຳຄູນ ຄູນທະວົງ ເປັນຮອງປະທານ ທັງເປັນປະທານກວດກາແລະໄດ້ເລືອກເອົາຮອງປະທານ ທັງໝົດ 15 ສະຫາຍ.

**(ສົນທະນາ)**

# ໂຮງຮຽນແສງອາທິດ ຢ້ຽມຊົມຫ້ອງມູນເຊື້ອ ແລະ ຫ້ອງປະຊຸມໃຫຍ່ສະພາແຫ່ງຊາດ



(ສພຊ) - ຕອນສວາຍວັນທີ 10 ກໍລະກົດຜ່ານມາ, ກົມສື່ມວນຊົນ ແລະ ຫ້ອງການຄຸ້ມຄອງຫໍສະພາແຫ່ງຊາດ, ຄະນະເລຂາທິການສະພາແຫ່ງຊາດ ໄດ້ຕ້ອນຮັບແລະນຳພາຄູ-ອາຈານ, ນັກຮຽນໂຮງຮຽນແສງອາທິດ ຈຳນວນ 30 ຄົນ ເຊິ່ງນຳໂດຍທ່ານ ອາຈານ ນາງ ມີນາ ຫຼວງຄຳແດງ ຮອງຜູ້ອຳນວຍການໂຮງຮຽນດັ່ງກ່າວ ທີ່ມາທັດສະນະສຶກສາຢູ່ສະພາແຫ່ງຊາດ.

ການມາມາທັດສະນະສຶກສາຄັ້ງນີ້, ໄດ້ຮັບຟັງການບັນລະຍາຍໂດຍຫຍໍ້ເຫດການຕ່າງໆ ໃນປະຫວັດສາດ, ຢ້ຽມຊົມການວາງສະແດງຮູບພາບ ແລະ ວັດຖຸພັນຕ່າງໆ, ຊົມຮູບເງົາປະຫວັດຄວາມເປັນມາຂອງສະພາປະຊາຊົນສູງສຸດ ຊຸດທີ I ເຖິງ ສະພາແຫ່ງຊາດຊຸດປັດຈຸບັນ (ຊຸດທີ IX) ແລະຢ້ຽມຊົມຫ້ອງມູນເຊື້ອ ແລະ ຫ້ອງປະຊຸມໃຫຍ່ຂອງສະພາແຫ່ງຊາດ ເຊິ່ງເຮັດໃຫ້ຄູ-ອາຈານ ແລະ ນ້ອງໆນັກຮຽນ ມີຄວາມຮັບຮູ້ເຂົ້າໃຈກ່ຽວກັບພາລະບົດບາດ, ສິດ ແລະ ໜ້າທີ່ຂອງອົງການນິຕິບັນຍັດຫຼາຍຂຶ້ນ.

**(ສອນສັກ ວັນວິໄຊ)**



## ຮຽບຮຽງ...

(ຕໍ່ຈາກໜ້າ 1)

ໃນຕົ້ນຕໍຂອງກອງປະຊຸມຄັ້ງນີ້ ແມ່ນເພື່ອລະດົມຄວາມຄິດ ແລະ ສຸມສະຕິປັນຍາເຂົ້າໃສ່ໃນການຄົ້ນຄວ້າ, ຮຽບຮຽງຮ່າງປຶ້ມປະຫວັດສະພາແຫ່ງຊາດ 50 ປີ ໃຫ້ມີເນື້ອໃນຄົບຖ້ວນ, ຖືກຕ້ອງ, ສອດຄ່ອງກັບສະພາບການເຄື່ອນໄຫວຕົວຈິງຂອງສະພາແຫ່ງຊາດ ໃນໄລຍະ 50 ປີທີ່ຜ່ານມາ.

ກອງປະຊຸມໄດ້ຮັບຟັງການສະເໜີຫຍໍ້ການປັບປຸງເນື້ອໃນຂອງແຕ່ລະໜ່ວຍງານເປັນຕົ້ນ: ການສະເໜີໂຄງຮ່າງປະຫວັດສະພາແຫ່ງຊາດ, ເນື້ອໃນພາກທີ I ຂະບວນວິວັດການກຳເນີດຂອງສະພາປະຊາຊົນສູງສຸດ, ເນື້ອໃນພາກທີ II ການເຕີບໃຫຍ່ຂະຫຍາຍຕົວຂອງສະພາແຫ່ງຊາດໃນແຕ່ລະໄລຍະ (1975-2025), ພາກທີ III ສະຫຼຸບສັງລວມ, ແລະ ຮ່າງບົດລາຍງານຜົນຂອງການຮຽບຮຽງເນື້ອໃນຂອງປຶ້ມປະຫວັດ 50 ປີ ສະພາແຫ່ງຊາດ ແລະ ຈັດແບ່ງເປັນກຸ່ມຄົ້ນຄວ້າລົງເລິກບັນດາເນື້ອໃນແຕ່ລະພາກ ໃຫ້ມີເນື້ອໃນຄົບຖ້ວນສົມບູນ ເພື່ອໄປລາຍງານຕໍ່ຄະນະປະຈຳສະພາແຫ່ງຊາດພິຈາລະນາແລະຈັດພິມແຈກຢາຍໃຫ້ທັນຕາມກຳນົດເວລາ.

**(ສອນສັກ ວັນວິໄຊ)**



## ຮຽບຮຽງ...

(ຕໍ່ຈາກໜ້າ 1)

ທານກຳມາທິການກົດໝາຍ, ຮອງລັດຖະມົນຕີກະຊວງຍຸຕິທຳ, ຮອງຫົວໜ້າຫ້ອງວ່າການສຳນັກງານປະທານປະເທດ, ຮອງຫົວໜ້າຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ, ຄະນະກົມ, ຄະນະພະແນກ ພ້ອມດ້ວຍພະນັກງານທີ່ກ່ຽວຂ້ອງ.

ທ່ານປອ.ນາງສູນທອນ ໄຊຍະຈັກ ໄດ້ມີຄຳເຫັນຕໍ່ທີ່ປະຊຸມ ເຊິ່ງທ່ານໄດ້ກ່າວວ່າ: ກົດໝາຍວ່າດ້ວຍພົກງານໄອຍະການ ແລະກົດໝາຍວ່າດ້ວຍການປັບປຸງບາງມາດຕາຂອງກົດໝາຍວ່າດ້ວຍສານປະຊາຊົນ ໄດ້ຖືກພິຈາລະນາຮັບ ຮອງເອົາໃນກອງປະຊຸມສະໄໝສາມັນເທື່ອທີ9ຂອງສະພາແຫ່ງຊາດ ຊຸດທີ IX ໃນຕອນບ່າຍວັນທີ 26 ມິຖຸນາ 2025 ດ້ວຍຄະແນນສຽງເຫັນດີຫຼາຍກວ່າ 97% ແລະ ເກືອບ 92% ຕາມລຳດັບ ເຊິ່ງໃນກອງປະຊຸມຄັ້ງນີ້ຈະໄດ້ພ້ອມກັນຄົ້ນຄວ້າຄືນບັນດາຄຳເຫັນຂອງສະມາຊິກສະພາແຫ່ງຊາດທີ່ໄດ້ຍົກຂຶ້ນ ແລະ ຄະນະຮັບຜິດຊອບໄດ້ຄົ້ນຄວ້າປັບປຸງເພື່ອຮັບປະກັນໃຫ້ກົດໝາຍ 2 ສະບັບນີ້ ມີເນື້ອໃນຄົບຖ້ວນ, ຮັດກຸມ ແລະ ສາມາດຈັດຕັ້ງປະຕິບັດໄດ້ຢ່າງມີປະສິດທິພາບ ແລະ ປະສິດທິຜົນ; ພ້ອມນັ້ນ, ທ່ານຍັງເນັ້ນໜັກຕື່ມອີກວ່າ: ຖ້າຍັງມີບັນຫາໃດທີ່ເນື້ອໃນກົດໝາຍກຳນົດແລ້ວ ແຕ່ຍັງບໍ່ທັນສອດຄ່ອງ, ບໍ່ທັນຈະແຈ້ງ ແລະ ບໍ່ທັນແທດເຖິງ ໃຫ້ຍົກຂຶ້ນມາປຶກສາຫາລືກັນຢ່າງລະອຽດ.

**(ນາງ ກຸກກິກ ບຸດດາໄຊ)**



## ສະຫະພັນ...

(ຕໍ່ຈາກໜ້າ 1)

(ສພຊ) - ວັນທີ 10 ກໍລະກົດຜ່ານມາ, ສະຫາຍ ນາງ ວິໄຊ ສຣິດທິຣາດ ປະທານຄະນະບໍລິຫານງານສະຫະພັນແມ່ຍິງສະພາແຫ່ງຊາດ ແລະ ສະຫາຍ ນາງ ອຳໄພວອນ ລ້ອມບຸນແພງ ກຳມະການສຳຮອງສູນກາງພັກ, ຄະນະປະຈຳພັກ,ເລຂາຄະນະພັກຮາກຖານຄະນະເລຂາທິການສະພາແຫ່ງຊາດ ພ້ອມດ້ວຍຄະນະ ໄດ້ເຂົ້າຮ່ວມພິທີສະເຫຼີມສະຫຼອງວັນສ້າງຕັ້ງສະຫະພັນແມ່ຍິງລາວ ຄົບຮອບ 70 ປີ ທີ່ສູນການຄ້າລາວ-ໄອເຕັກ, ນະຄອນຫຼວງວຽງຈັນ.

ໃນພິທີ, ໄດ້ມີການປາຖະກະຖາມູນເຊື້ອແມ່ຍິງລາວໃນພາລະກິດປົດປ່ອຍຊາດແລະການປົກປັກຮັກສາແລະພັດທະນາປະເທດຊາດ ໃນຫົວຂໍ້ "ມູນເຊື້ອການກຳເນີດ ແລະ ເຕີບໃຫຍ່ຂະຫຍາຍຕົວຂອງອົງການຈັດຕັ້ງສະຫະພັນແມ່ຍິງລາວ ແລະ ເສີມຂະຫຍາຍຄຸນລັກສະນະທີ່ເປັນມູນເຊື້ອຂອງສະຫະພັນແມ່ຍິງລາວ ແລະ ແມ່ຍິງລາວ". ພາຍໃນງານ ໄດ້ມີການຈັດສຳມະນາໃຫ້ຄວາມຮູ້ທາງດ້ານວິຊາການໃນຫຼາຍຫົວຂໍ້ ເປັນຕົ້ນ: ແມ່ຍິງກັບການຮັກສາສຸຂະພາບ (ການໃຫ້ຄວາມຮູ້ກ່ຽວກັບການປ້ອງກັນ ແລະ ປິ່ນປົວມະເຮັງເຕົ້ານົມ ແລະ ມະເຮັງປາກໝົດລູກ), ແມ່ຍິງກັບວັດທະນະທຳ, ແມ່ຍິງກັບການກໍ່ຕັ້ງທຸລະກິດ, ແມ່ຍິງກັບສິ່ງແວດລ້ອມ, ການປົກປ້ອງແມ່ຍິງ ແລະ ໄວໜຸ່ມ, ການປົກປ້ອງສິດຊັບສິນທາງປັນຍາ ແລະ ຫົວຂໍ້ອື່ນໆ; ກິດຈະກຳສະແດງສິລະປະ ແລະ ການເດີນແບບອາພອນເຜດບັນດາເຜົ່າຂອງເຍົາວະຊົນ, ເປີດຮັບບໍລິຈາກເລືອດເພື່ອຊ່ວຍເຫຼືອສັງຄົມ ກໍຄືຄົນເຈັບທີ່ຕ້ອງການເລືອດຢູ່ໂຮງໝໍຕ່າງໆໃນທົ່ວປະເທດພາຍໃຕ້ຄຳຂວັນ "70 ປີ ມີໄຊ ຮ່ວມໃຈໃຫ້ເລືອດ ຊ່ວຍຊີວິດ", ບໍລິການກວດຕາບໍ່ເສຍຄ່າ ແລະ ໃຫ້ຄຳປຶກສາກໍລະນີທີ່ມີບັນຫາທາງສາຍຕາ ໂດຍທ່ານໝໍທີ່ມີຄວາມຊ່ຽວຊານໃນສະເພາະດ້ານ. ນອກນີ້, ຍັງມີງານຕະຫຼາດນັດເພື່ອວາງສະແດງຜົນງານການເຄື່ອນໄຫວດ້ານຕ່າງໆ ຂອງສະຫະພັນແມ່ຍິງບັນດາກະຊວງ, ອົງການ 13 ພາກສ່ວນ (44 ຮ້ານ); ວາງສະແດງຜະລິດຕະພັນຂອງສະຫະພັນແມ່ຍິງແຂວງແລະນະຄອນຫຼວງ, ນັກທຸລະກິດຍິງ, ຜູ້ປະກອບການ, ຊາວຄ້າ ຂາຍເພດຍິງ.

ງານຄັ້ງນີ້ ໄດ້ດຳເນີນເປັນເວລາ 7 ວັນ ນັບແຕ່ວັນທີວັນທີ 7-13 ກໍລະກົດນີ້.






## ສຳເລັດ...

(ຕໍ່ຈາກໜ້າ 1)

ອານຸພາບ ຕຸນາລົມ ຄະນະເລຂາທິການສູນກາງພັກ, ເລຂາຄະນະພັກ, ປະທານສະພາປະຊາຊົນນະຄອນຫຼວງວຽງຈັນ,ເຂົ້າຮ່ວມມີທ່ານອາດສະພັງທອງ ສີພັນດອນ ກຳມະການສູນກາງພັກ, ຮອງເລຂາຄະນະພັກ, ເຈົ້າຄອງນະຄອນຫຼວງວຽງຈັນ, ບັນດາທ່ານການນຳພັກ-ລັດຂັ້ນສູງ ນວ, ສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງທີ 1, ສະມາຊິກສະພາປະຊາຊົນນະຄອນຫຼວງວຽງຈັນ ພ້ອມດ້ວຍແຂກຖືກເຊີນ.

ກອງປະຊຸມມີຄວາມເປັນເອກະພາບສູງຮັບຮອງເອົາບັນຫາສຳຄັນຂອງນະຄອນຫຼວງ ຄື:

1. ບົດລາຍງານຂອງທ່ານເຈົ້າຄອງ ກ່ຽວກັບການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ,ແຜນງົບປະມານ 6 ເດືອນຕົ້ນປີ ແລະ ທິດທາງແຜນການ 6 ເດືອນທ້າຍປີ 2025;

2. ການສະເໜີປັບລາຄາຊົມໃຊ້ນ້ຳປະປາ ປີ 2025 ຂອງລັດວິສາຫະກິດນ້ຳປະປາ ນວ;

3. ການປັບປຸງກົງຈັກການຈັດຕັ້ງຂອງອົງການປົກຄອງຕາມການສະເໜີຂອງທ່ານເຈົ້າຄອງ;

4.ຮ່າງຂໍ້ຕົກລົງວ່າດ້ວຍການຄຸ້ມຄອງ ແລະ ກຳຈັດຂີ້ເຫຍື້ອ;

5. ບົດສະຫຼຸບຜົນການຈັດຕັ້ງປະຕິບັດແຜນການເຄື່ອນໄຫວວຽກງານ 6 ເດືອນຕົ້ນປີ ແລະທິດທາງແຜນການ6ເດືອນທ້າຍປີ 2025 ຂອງສະພາປະຊາຊົນນະຄອນຫຼວງວຽງຈັນຊຸດທີ II ແລະ ແຜນການເຄື່ອນໄຫວພົບປະຜູ້ມີສິດເລືອກຕັ້ງ ເພື່ອເຜີຍແຜ່ຜົນສຳເລັດກອງປະຊຸມສະໄໝສາມັນເທື່ອທີ 9 ຂອງສະພາແຫ່ງຊາດ ຊຸດທີ IX ແລະ ສປນວ ຊຸດທີ II.

ກອງປະຊຸມໄດ້ຮັບຟັງການລາຍງານການປະເມີນຕີລາຄາໂດຍສັງເຂບການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ 5 ປີ ຄັ້ງທີ IX (2021-2025); ການຈັດຕັ້ງປະຕິບັດ 8 ແຜນງານ, 20 ໂຄງການລະດັບຊາດ, ໂຄງການປິ່ນອ້ອມທີ່ກຳນົດໃນແຜນການ 5 ປີ; ການລາຍງານ ແລະ ປະກອບຄຳເຫັນໃສ່ແຜນພັດທະນາວຽກງານສະພາປະຊາຊົນນະຄອນຫຼວງວຽງຈັນ ໄລຍະປີ 2026-2030; ການລາຍງານ ແລະ ຊີ້ແຈງບັນຫາສຳຄັນຕາມການສະເໜີຂອງຄະນະປະຈຳສປນວຄື: ການຕິດຕາມກວດກາ ແລະ ຄຸ້ມຄອງການລົງທຶນພາຍໃນ ແລະ ຕ່າງປະເທດ ໃນຂະແໜງການທ່ອງທ່ຽວ ແລະ ບັນເທີງ, ຄວາມຄືບໜ້າໃນການຈັດຕັ້ງປະຕິບັດໂຄງການປັບປຸງ ແລະສ້ອມແປງເສັ້ນທາງຫຼວງແຫ່ງຊາດເລກທີ 13 ໃຕ້ເຂດບ້ານໂຄກສີວິໄລ ເມືອງໄຊທານີ ຫາ ບ້ານສົມສະຫວາດ ເມືອງປາກງື່ມ, ວິທີການ ແລະ ມາດຕະການແກ້ໄຂບັນຫານ້ຳຖ້ວມຂັງພາຍໃນຕົວເມືອງ, ສະພາບການເກີດອັກຄີໄພ ແລະ ວິທີການ-ມາດຕະການສະກັດກັ້ນ ແລະ ແກ້ໄຂໃນຕໍ່ໜ້າ. ນອກຈາກນີ້,ຍັງໄດ້ຮັບຟັງການຊີ້ແຈງບາງບັນຫາສຳຄັນຈຳນວນໜຶ່ງທີ່ຜູ້ແທນຊັກຖາມແລະຍົກຂຶ້ນໃນກອງປະຊຸມ ຈາກອົງການປົກຄອງ ແລະ ພາກສ່ວນທີ່ກ່ຽວຂ້ອງ ຢ່າງຈະແຈ້ງຊັດເຈນ.

ທ່ານອານຸພາບຕຸນາລົມ ກ່າວວ່າ: ອີກ 6 ເດືອນທ້າຍປີ 2025 ແມ່ນໄລຍະມ້ວນທ້າຍໃນການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ IX ແລະ ບັນດາຄາດໝາຍດ້ານຕ່າງໆທີ່ກຳນົດໃນມະຕິກອງປະຊຸມໃຫຍ່ຄັ້ງທີ VII ຂອງອົງຄະນະພັກນະຄອນຫຼວງວຽງຈັນ ເຊິ່ງໃນສະພາບທີ່ປະເທດຂອງພວກເຮົາຍັງຈະສືບຕໍ່ປະເຊີນກັບຄວາມຫຍຸ້ງຍາກທາງດ້ານເສດຖະກິດ-ສັງຄົມ ທັງຈາກພາກພື້ນແລະສາກົນບວກກັບຄວາມບອບບາງຂອງສະພາບເສດຖະກິດພາຍໃນ ຈຶ່ງຮຽກຮ້ອງໃຫ້ທົ່ວອົງການຈັດຕັ້ງພັກ-ລັດຂອງ ນວ, ກຳລັງປະກອບອາວຸດ ແລະ ປວງຊົນຊາວ ນວ ຈະຕ້ອງໄດ້ສືບຕໍ່ເພີ່ມທະວີຄວາມສາມັກຄີເປັນປຶກແຜ່ນ, ສູ້ຊົນຜ່ານຜ່າຄວາມຫຍຸ້ງຍາກ ແລະ ສິ່ງທ້າທາຍທົດສອບຕ່າງໆ ເພື່ອພ້ອມກັນຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ IX ແລະ ມະຕິ VII ຂອງອົງຄະນະພັກ ນວ ໄປພ້ອມໆກັບການຈັດຕັ້ງປະຕິບັດບັນດາຄາດໝາຍທີ່ໄດ້ກຳນົດໃນມະຕິກອງປະຊຸມຄັ້ງນີ້ ໃຫ້ບັນລຸຜົນສຳເລັດຕາມແຜນການທີ່ວາງໄວ້; ສູ້ຊົນສືບຕໍ່ຈັດຕັ້ງປະຕິບັດ 2 ວາລະແຫ່ງຊາດໃຫ້ແຂງແຮງ ແລະ ເປັນຂະບວນການທີ່ຟົດຟື້ນຂຶ້ນກວ່າເກົ່າ; ເພີ່ມທະວີຄວາມເອົາໃຈໃສ່ແລະຄວາມເປັນເຈົ້າການໃນການກະກຽມສ້າງຂະບວນການຮອບດ້ານໃຫ້ແກ່ການດຳເນີນກອງປະຊຸມໃຫຍ່ຄັ້ງທີ VIII ຂອງອົງຄະນະພັກ ນວ, ການສະເຫຼີມສະຫຼອງ 3 ວັນປະຫວັດສາດ ແລະ ການກະກຽມເປັນເຈົ້າພາບງານກິລາແຫ່ງຊາດທີ່ຈະໄດ້ຈັດຂຶ້ນໃນທ້າຍປີນີ້.

ສຳລັບການປັບປຸງກົງຈັກການຈັດຕັ້ງຂອງອົງການປົກຄອງຕາມການສະເໜີຂອງທ່ານເຈົ້າຄອງນັ້ນ ແມ່ນໂຮມພະແນກແຜນການ ແລະ ການລົງທຶນ (ໂອນວຽກບໍລິຫານຈັດຕັ້ງ, ກວດກາ, ແຜນການ, ປະເມີນຜົນຮ່ວມມື, ສະຖິຕິ) ເຂົ້າກັບພະແນກການເງິນ ຊື່ໃໝ່ວ່າ: ພະແນກການເງິນ; ໂຮມພະແນກພະລັງງານ ແລະ ບໍ່ແຮ່ ເຂົ້າກັບພະແນກອຸດສາຫະກຳແລະການຄ້າ ຊື່ໃໝ່ວ່າ: ພະແນກອຸດສາຫະກຳ ແລະ ການຄ້າ; ໂຮມພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ແລະ ພະແນກກະສິກຳ ແລະ ປ່າໄມ້ ເຂົ້າກັນ ຊື່ໃໝ່ວ່າ: ພະແນກກະສິກຳ ແລະ ສິ່ງແວດລ້ອມ; ໂອນວຽກຖະແຫຼງຂ່າວ ຢູ່ພະແນກຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ໄປຂຶ້ນກັບຄະນະໂຄສະນາອົບຮົມ ນວ, ເມືອງ ແລະ ປ່ຽນຊື່ພະແນກຖະແຫຼງຂ່າວ,ວັດທະນະທຳ ແລະ ທ່ອງທ່ຽວ ເປັນພະແນກວັດທະນະທຳ ແລະ ການທ່ອງທ່ຽວ; ໂອນວຽກສົ່ງເສີມການລົງທຶນ ແລະວຽກກວດກາການລົງທຶນ ຂອງພະແນກແຜນການ ແລະ ການລົງທຶນ ນວ, ເມືອງ ໄປເຂົ້າກັບຫ້ອງການຄະນະຄຸ້ມຄອງເຂດເສດຖະກິດພິເສດ ນວ ຊື່ໃໝ່ວ່າ: ຄະນະກຳມະການສົ່ງເສີມ ແລະ ຄຸ້ມຄອງການລົງທຶນ ນວ; ຮັບຮອງເອົາອົງການກາແດງ ນວ ເປັນກົງຈັກຂອງອົງການປົກຄອງ ນວ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ5ຂອງດຳລັດສະບັບເລກທີ 22/ນຍ, ລົງວັນທີ 28 ມັງກອນ 2022; ຍຸບເລີກພະແນກພາຍໃນ ໂດຍຈັດສັນໂອນບັນດາໜ້າວຽກໄປຂຶ້ນກັບຄະນະຈັດຕັ້ງ, ຫ້ອງວ່າການ, ກອງບັນຊາການປ້ອງກັນຄວາມສະຫງົບແລະພະແນກການເງິນ.

# ພົບປະສອງຝ່າຍລະຫວ່າງ ສປນວ ແລະ ສະພາຜູ້ແທນປະຊາຊົນແຂວງກວາງຕຸ້ງ




(ສພຂ) - ວັນທີ 30 ມິຖຸນາຜ່ານມາ ທີ່ຫ້ອງວ່າການນະຄອນຫຼວງວຽງຈັນ ໄດ້ມີພິທີພົບປະສອງຝ່າຍລະຫວ່າງສະພາປະຊາຊົນນະຄອນຫຼວງວຽງຈັນ (ສປນວ) ແລະສະພາຜູ້ແທນປະຊາຊົນແຂວງກວາງຕຸ້ງ ສປຈີນ ເຊິ່ງຝ່າຍລາວນຳໂດຍ ສະຫາຍນາງ ລຳພອຍ ສີອັກຄະຈັນ ຄະນະປະຈຳພັກ, ຮອງປະທານ ສປນວ ແລະ ຝ່າຍ ສປຈີນ ນຳໂດຍສະຫາຍ ຫຼູຍ ເຢ່ເສີງ ຄະນະພັກຂອງຄະນະກຳມະການປະຈຳສະພາຜູ້ແທນປະຊາຊົນແຂວງກວາງຕຸ້ງ ໃນໂອກາດເດີນທາງມາຢ້ຽມຢາມ ແລະ ເຮັດວຽກຢູ່ ສປປລາວ.

ທັງນີ້, ກໍເພື່ອຈັດຕັ້ງຜັນຂະຫຍາຍ ແລະ ເປັນຕົວແບບທີ່ດີໃນການປະກອບສ່ວນໃຫ້ແກ່ການຮັດແໜ້ນສາຍພົວພັນມິດຕະພາບ ແລະ ການຮ່ວມມືຮອບດ້ານ ໝັ້ນຄົງຍາວນານຕາມທິດ 4 ດີ ແລະ ຄູ່ຮ່ວມຊາຕາກຳ ລາວ-ຈີນ ເຂົ້າໃນການພັດທະນາທາງດ້ານຊັບພະຍາກອນມະນຸດ, ພື້ນຖານໂຄງລ່າງຂອງນະຄອນຫຼວງວຽງຈັນ ທັງເປັນການເສີມສ້າງຄວາມ ຮັບຮູ້ເຂົ້າໃຈ, ໃຫ້ບົດຮຽນ-ປະສົບການເຊິ່ງກັນແລະກັນ ໃນຂົງເຂດການຮ່ວມມືດ້ານສະພາປະຊາຊົນຂັ້ນແຂວງ, ດ້ານວິຊາການສະເພາະ ແລະ ການຄຸ້ມຄອງເສດຖະກິດ-ສັງຄົມ ໂດຍສະເພາະແມ່ນປະສົບການແລະຮູບແບບວິທີການດຳເນີນກ່ຽວ ກັບວຽກງານນະໂຍບາຍລະບຽບກົດໝາຍ, ດ້ານການຕິດຕາມກວດກາງົບປະມານ ແລະດ້ານອື່ນໆ ທີ່ທັງສອງຝ່າຍມີຄວາມ ສົນໃຈຮ່ວມກັນ.

ໃນການພົບປະ, ທັງສອງຝ່າຍໄດ້ແຈ້ງສະພາບການທີ່ພົ້ນເດັ່ນໃນການພັດທະນາເສດຖະກິດ-ສັງຄົມຂອງຕົນ ໃຫ້ ກັນແລະກັນຊາບໂດຍສັງເຂບ ພ້ອມທັງແລກປ່ຽນບົດຮຽນໃນຫຼາຍດ້ານ ເປັນຕົ້ນວຽກງານຂອງສະພາປະຊາຊົນ ໂດຍສະເພາະພາລະບົດບາດດ້ານການຕິດຕາມກວດກາ ທີ່ຕິດພັນກັບການກວດກາງົບປະມານ; ສອງຝ່າຍໄດ້ສະແດງຄວາມຊົມເຊີຍ ແລະ ຕີລາຄາສູງຕໍ່ສາຍພົວພັນມິດຕະພາບໃນການຮ່ວມມືທີ່ເປັນມູນເຊື້ອທີ່ດີລະຫວ່າງ ສປປລາວ ແລະ ສປຈີນ ໃນໄລ ຍະຜ່ານມາ ແລະຈະສືບຕໍ່ຊຸກຍູ້ການພົວພັນຮ່ວມມືຂອງສອງສະພາໃນຕໍ່ໜ້າ ໃຫ້ມີຄວາມເລິກເຊິ່ງຍິ່ງໆຂຶ້ນ.

ນອກຈາກນີ້, ຄະນະຜູ້ແທນແຂວງກວາງຕຸ້ງ ຍັງໄດ້ມອບງົບປະມານຊ່ວຍເຫຼືອເພື່ອນຳໃຊ້ເຂົ້າໃນວຽກງານພັດທະນາກິລາໃຫ້ແກ່ ນວ ເນື່ອງໃນໂອກາດຄົບຮອບ 10 ປີ ແຫ່ງການສ້າງຕັ້ງນະຄອນ ແລະ ແຂວງມິດຕະພາບ ລະຫວ່າງນະຄອນຫຼວງວຽງຈັນ ແລະ ແຂວງກວາງຕຸ້ງ (2015-2025).

# ສຳມະນາຮ່າງຂໍ້ຕົກລົງການຄຸ້ມຄອງ ແລະ ກຳຈັດຂີ້ເຫຍື້ອໃນ ນວ

(ສພຂ) - ວັນທີ 01 ກໍລະກົດຜ່ານມາທີ່ສະພາປະຊາຊົນນະຄອນຫຼວງວຽງຈັນ(ສປນວ) ໄດ້ດຳເນີນກອງປະຊຸມສຳມະນາຮ່າງຂໍ້ຕົກລົງວ່າດ້ວຍການຄຸ້ມຄອງ ແລະ ກຳຈັດຂີ້ເຫຍື້ອ ໃນນະຄອນຫຼວງວຽງຈັນໂດຍການເປັນປະທານ ຂອງທ່ານ ນາງ ລຳພອຍ ສີອັກຄະຈັນ ຄະນະປະຈຳພັກ, ຮອງປະທານສະພາປະຊາຊົນນະຄອນຫຼວງວຽງຈັນ, ມີບັນດາທ່ານສະມາຊິກສະພາແຫ່ງຊາດ (ສສຊ) ປະຈຳເຂດເລືອກຕັ້ງທີ 1 ແລະ ສະມາຊິກສະພາປະຊາຊົນນະຄອນຫຼວງວຽງຈັນ (ສສນວ) ເຂົ້າຮ່ວມ.



ທ່ານ ປັນຍາ ມະນີວົງ ຮອງຫົວໜ້າຫ້ອງການຄຸ້ມຄອງ ແລະບໍລິຫານຕົວເມືອງວຽງຈັນ ຕາງໜ້າຄະນະຮັບຜິດຊອບຮ່າງຂໍ້ຕົກລົງວ່າດ້ວຍການຄຸ້ມຄອງ ແລະກຳຈັດຂີ້ເຫຍື້ອ ໃນນະຄອນຫຼວງວຽງຈັນ ໄດ້ສະເໜີຫຍໍ້ກ່ຽວກັບເຫດຜົນ ແລະ ຄວາມຈຳເປັນໃນການສ້າງຮ່າງຂໍ້ຕົກລົງດັ່ງກ່າວ ເຊິ່ງເປັນການຜັນຂະຫຍາຍແຜນຍຸດທະສາດ ແລະ ແຜນດຳເນີນງານການຄຸ້ມຄອງຂີ້ເຫຍື້ອແບບຍືນຍົງສຳລັບ ນວ ຮອດປີ 2030 ແນໃສ່ປົກປັກຮັກສາສິ່ງແວດລ້ອມໃນຕົວເມືອງ ຕາມນະໂຍບາຍ 6 ສ ໃຫ້ບັນລຸວິໄສທັດນະຄອນຫຼວງວຽງຈັນ ມີຄວາມສະອາດ ສີຂຽວ ແລະ ໜ້າຢູ່, ເປັນການຄຸ້ມ ຄອງປົກປ້ອງສິດຜົນປະໂຫຍດລະຫວ່າງຜູ້ໃຊ້ບໍລິການກັບພາກສ່ວນໃຫ້ບໍລິການເກັບມ້ຽນຂົນສົ່ງຂີ້ເຫຍື້ອ, ຄຸ້ມຄອງຕິດຕາມກວດກາການເຄື່ອນໄຫວຂອງບັນດາຫົວໜ່ວຍທຸລະກິດ, ເພື່ອຮັບປະກັນບໍ່ໃຫ້ມີຜົນກະທົບຕໍ່ສິ່ງແວດລ້ອມ, ຊຸກຍູ້ໃຫ້ທຸກພາກສ່ວນໃນສັງຄົມ ມີສ່ວນຮ່ວມໃນວຽກງານຄຸ້ມຄອງແລະກຳຈັດຂີ້ເຫຍື້ອໃນ ນວ ທັງເປັນບ່ອນອີງໃຫ້ ແກ່ພະແນກການທີ່ກ່ຽວຂ້ອງ, ອຳນາດການປົກຄອງເມືອງ, ບ້ານ ທົ່ວ ນວ ໃນການຄຸ້ມຄອງລັດ, ຄຸ້ມຄອງສັງຄົມ ໃນວຽກງານຄຸ້ມຄອງ ແລະກຳຈັດຂີ້ເຫຍື້ອ.

ຫຼັງຈາກນັ້ນ, ບັນດາທ່ານ ສສຊ ແລະ ສສນວ ໄດ້ປະກອບຄຳຄິດຄຳເຫັນຢ່າງມີຈຸດສຸມ ຕໍ່ໂຄງສ້າງ ແລະເນື້ອ ໃນຂອງຮ່າງຂໍ້ຕົກລົງດັ່ງກ່າວ ເພື່ອໃຫ້ຄະນະຮັບຜິດຊອບໄດ້ນຳໄປຄົ້ນຄວ້າ, ປັບປຸງຄືນ ໃຫ້ເນື້ອໃນມີຄວາມສົມບູນ, ຄົບຖ້ວນ ກ່ອນນຳເຂົ້າພິຈາລະນາໃນກອງປະຊຸມສະໄໝສາມັນເທື່ອທີ 9 ຂອງ ສປນວ ຊຸດທີ II.




# ສພຂ ຜົ້ງສາລີ ຮັບຮອງການແຕ່ງຕັ້ງ ປະທານຄະນະກຳມະການປົກຄອງເມືອງ



(ສພຂ) - ກອງປະຊຸມສະໄໝວິສາມັນເທື່ອທີ 1 ຂອງສະພາປະຊາຊົນແຂວງ (ສພຂ) ຜົ້ງສາລີ ຊຸດທີ II ໄດ້ດຳເນີນໃນວັນທີ 30 ມິຖຸນາຜ່ານມາ ໂດຍການເປັນປະທານຂອງທ່ານ ທອງສີ ເສົາສຸລິພົມ ຮອງເລຂາພັກແຂວງ, ປະທານສະພາປະຊາຊົນແຂວງ; ເຂົ້າຮ່ວມມີທ່ານຄຳພອຍ ວັນນະສານ ກຳມະການສູນກາງພັກ, ເລຂາພັກແຂວງ, ເຈົ້າແຂວງຜົ້ງສາລີ ພ້ອມດ້ວຍບັນດາທ່ານຮອງເຈົ້າແຂວງ, ຄະນະປະຈຳພັກແຂວງ, ສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງທີ 2, ສະມາຊິກສະພາປະຊາຊົນແຂວງ, ສະມາຊິກອົງການປົກຄອງແຂວງ, ອົງການແນວລາວສ້າງຊາດ, ອົງການຈັດຕັ້ງມະຫາຊົນ, ສະຫະພັນນັກຮົບເກົ່າ, ອົງການຈັດຕັ້ງພັກ-ລັດ, ອົງການລັດທຽບເທົ່າຂັ້ນແຂວງ ແລະ ວິສາຫະກິດ.

ກອງປະຊຸມໄດ້ພິຈາລະນາຮັບຮອງເອົາການສະເໜີແຕ່ງຕັ້ງປະທານຄະນະກຳມະການປົກຄອງເມືອງ 7 ເມືອງ ໃນທົ່ວແຂວງຜົ້ງສາລີ, ປະກອບມີບັນດາທ່ານດັ່ງນີ້:

1. ທ່ານຄຳພັນສຸຍະລັດ ເປັນປະທານຄະນະກຳມະການປົກຄອງເມືອງຜົ້ງສາລີ;
2. ທ່ານ ທອງຄູນ ໄຊຍະຄອນ ເປັນປະທານຄະນະກຳມະການປົກຄອງເມືອງໃໝ່;
3. ທ່ານຄຳໄລສຸລິພອນ ເປັນປະທານຄະນະກຳມະການປົກຄອງເມືອງຂວາ;
4. ທ່ານ ມຸດ ໄຊຍະວົງ ເປັນປະທານຄະນະກຳມະການປົກຄອງເມືອງສຳພັນ;
5. ທ່ານ ວິສັນ ວົງນະຄອນ ເປັນປະທານຄະນະກຳມະການປົກຄອງເມືອງບຸນເໜືອ;
6. ທ່ານ ທອງສີ ອິນຈັກ ເປັນປະທານຄະນະກຳມະການປົກຄອງເມືອງຍອດອູ;
7. ທ່ານ ຄຳຫຼ້າ ດວງມະໄລ ເປັນປະທານຄະນະກຳມະການປົກຄອງເມືອງບຸນໃຕ້.

ພ້ອມກັນນີ້, ກໍໄດ້ພິຈາລະນາ ແລະ ຮັບຮອງເອົາການສະເໜີແຕ່ງຕັ້ງທ່ານ ກອງແກ້ວ ຂັນຕະພົມເປັນຫົວໜ້າອົງການພັດທະນາ ແລະ ບໍລິຫານຕົວເມືອງ ແລະ ການປັບປຸງກົງຈັກການຈັດຕັ້ງຂອງອົງການປົກຄອງແຂວງ ຄື:

1. ໂຮມພະແນກແຜນການ ແລະ ການລົງທຶນ ເຂົ້າກັບພະແນກການເງິນ ເປັນພະແນກການເງິນ;
2. ໂຮມພະແນກພະລັງງານແລະບໍ່ແຮ່ເຂົ້າກັບພະແນກອຸດສາຫະກຳ ແລະການຄ້າເປັນພະແນກອຸດສາຫະກຳແລະການຄ້າ;
3. ໂຮມພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ເຂົ້າກັບພະແນກກະສິກຳ ແລະ ປ່າໄມ້ ເປັນພະແນກກະສິກຳ ແລະ ສິ່ງແວດລ້ອມ;
4. ໂຮມພະແນກພາຍໃນ ພ້ອມທັງຍົກຍ້າຍບຸກຄະລາກອນທີ່ສອດຄ່ອງກັບພາລະບົດບາດ ໄປເຂົ້າກັບຄະນະຈັດຕັ້ງແຂວງ,ຫ້ອງວ່າການແຂວງແລະພະແນກການອື່ນທີ່ກ່ຽວຂ້ອງຕາມຂະແໜງສາຍຕັ້ງທີ່ມີການປັບປຸງຢູ່ກະຊວງ-ອົງການ;
5. ໂອນວຽກງານຖະແຫຼງຂ່າວພ້ອມທັງຍົກຍ້າຍບຸກຄະລາກອນອອກຈາກພະແນກຖະແຫຼງຂ່າວ, ວັດທະນະທຳ ແລະທ່ອງທ່ຽວ ໄປຂຶ້ນກັບຄະນະໂຄສະນາອົບຮົມແຂວງ, ປ່ຽນຊື່ພະແນກຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ເປັນພະແນກວັດທະນະທຳ ແລະ ການທ່ອງທ່ຽວ.

ສຳລັບວຽກ, ກົງຈັກລະອຽດ (ຂະແໜງການ) ຂອງແຕ່ລະພະແນກທີ່ຖືກໂຮມ,ຍຸບ, ໂອນຈະໄປຂຶ້ນກັບພາກສ່ວນໃດນັ້ນ ແມ່ນໃຫ້ປະຕິບັດຕາມກົງຈັກຂັ້ນສູນກາງທີ່ຖືກຮັບຮອງແລະຕາມການຕົກລົງຂອງຂັ້ນເທິງ; ສ່ວນກົງຈັກການຈັດຕັ້ງຢູ່ຂັ້ນເມືອງມອບໃຫ້ປະທານຄະນະກຳມະການປົກຄອງແຂວງຊີ້ນຳປະທານຄະນະກຳມະການປົກຄອງເມືອງຈັດຕັ້ງປະຕິບັດໂຮມບັນດາຫ້ອງການ, ໂອນວຽກ ພ້ອມທັງແຕ່ງຕັ້ງບຸກຄະລາກອນຕາມພາລະບົດບາດຂອງຕົນ.

**(ພຸດສະດີ ແສງຈອມຄູນ ແລະ ບົວແສງ ສຸລິວົງ)**

## ສພຂ ຫຼວງນ້ຳທາ ຮັບຮອງການປັບປຸງກົງຈັກການຈັດຕັ້ງ




(ສພຂ) - ວັນຈັນທີ 30 ມິຖຸນາຜ່ານມາ, ທ່ານ ມີໄຊ ມີວິໄລ ເລຂາທິການສະພາປະຊາຊົນແຂວງ ໄດ້ຖະແຫຼງຂ່າວຜົນສຳເລັດກອງປະຊຸມສະໄໝວິສາມັນເທື່ອທີ 4 ຂອງສະພາປະຊາຊົນແຂວງ (ສພຂ) ຫຼວງນ້ຳທາ ຊຸດທີ II ເຊິ່ງທ່ານໄດ້ກ່າວວ່າ: ກອງປະຊຸມສະໄໝວິສາມັນເທື່ອທີ4ຂອງສະພາປະຊາຊົນແຂວງ ຫຼວງນ້ຳທາ ຊຸດທີ II ໄດ້ໄຂຂຶ້ນຢ່າງເປັນທາງການໃນຕອນບ່າຍວັນທີ 30 ມິຖຸນາ 2025 ທີ່ສະໂມສອນແຂວງ ແລະ ອັດລົງດ້ວຍຜົນສຳເລັດອັນຈົບງາມໃນຕອນແລງຂອງວັນດຽວກັນ ໂດຍການເປັນປະທານຂອງທ່ານ ຄຳຟອງ ອິນມະນີ ຮອງເລຂາພັກແຂວງ, ປະທານສະພາປະຊາຊົນແຂວງ, ມີທ່ານ ວຽງສະຫວັດ ສີພັນດອນ ກຳມະການສູນກາງພັກ, ເລຂາພັກແຂວງ, ເຈົ້າແຂວງ, ບັນດາທ່ານສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງທີ 3, ສະມາຊິກສະພາປະຊາຊົນແຂວງ, ເລຂາພັກເມືອງ, ຫົວໜ້າ-ຮອງຫົວໜ້າພະແນກການພ້ອມດ້ວຍພາກສ່ວນທີ່ກ່ຽວຂ້ອງ ເຂົ້າຮ່ວມ 160 ທ່ານ.

ກອງປະຊຸມຄັ້ງນີ້, ສະມາຊິກສະພາປະຊາຊົນແຂວງ ໄດ້ຍົກສູງຄວາມຮັບຜິດຊອບຂອງຕົນເຂົ້າໃນການຄົ້ນຄວ້າ, ພິຈາລະນາ ແລະຮັບຮອງເອົາການສະເໜີປັບປຸງກົງຈັກການຈັດຕັ້ງຂັ້ນແຂວງ ຄື: ໂຮມພະແນກແຜນການແລະການລົງທຶນ ເຂົ້າກັບພະແນກການເງິນ ເອີ້ນຊື່ວ່າ ພະແນກການເງິນ, ໂຮມພະແນກພະລັງງານ ແລະ ບໍ່ແຮ່ ເຂົ້າກັບພະແນກອຸດສາຫະກຳ ແລະ ການຄ້າ ເອີ້ນຊື່ວ່າ ພະແນກອຸດສາຫະກຳ ແລະ ການຄ້າ, ໂຮມພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມແຂວງ ເຂົ້າກັບພະແນກກະສິກຳ ແລະ ປ່າໄມ້ ເອີ້ນຊື່ວ່າ ພະແນກກະສິກຳ ແລະ ສິ່ງແວດລ້ອມ. ພະແນກພາຍໃນແຂວງ: ເອົາວຽກງານຄຸ້ມຄອງລັດຖະກອນ, ວຽກງານແຂ່ງຂັນຍ້ອງຍໍ ແລະ ວຽກງານອື່ນໆ ທີ່ສອດຄ່ອງກັບພາລະບົດບາດຂອງຄະນະຈັດຕັ້ງແຂວງ ພ້ອມທັງຍົກຍ້າຍບຸກຄະລາກອນທີ່ເຮັດວຽກງານດັ່ງກ່າວ ໄປເຂົ້າກັບຄະນະຈັດຕັ້ງແຂວງ; ໂອນວຽກງານແຜນທີ່, ວຽກງານສາສະໜາແລະວຽກງານເອກະສານ ພ້ອມທັງບຸກຄະລາກອນທີ່ເຮັດວຽກງານດັ່ງກ່າວ ໄປເຂົ້າກັບຫ້ອງວ່າການແຂວງ ແລະ ພະແນກການ, ອົງການທຽບເທົ່າ ທີ່ເຫັນວ່າມີຄວາມສອດຄ່ອງ; ໂອນວຽກງານສື່ມວນຊົນ (ຖະແຫຼງຂ່າວ) ພ້ອມທັງຍົກຍ້າຍບຸກຄະລາກອນອອກຈາກພະແນກຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ໄປຂຶ້ນກັບຄະນະໂຄສະນາອົບຮົມແຂວງ ແລະ ປ່ຽນຊື່ພະແນກຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ເປັນຊື່ໃໝ່ເອີ້ນວ່າ ພະແນກວັດທະນະທຳແລະການທ່ອງທ່ຽວ.

ພິຈາລະນາ, ຮັບຮອງເອົາການສະເໜີຍົກຍ້າຍບັນດາຫົວໜ້າພະແນກການ 3 ທ່ານ ດັ່ງນີ້: ທ່ານ ຄຳລາ ຂານສະຫງ່າ ກຳມະການພັກແຂວງ ແລະ ທ່ານ ວົງມະນີ ເພື່ອປະຊາ ກຳມະການພັກແຂວງ ມາປະຈຳການຢູ່ຫ້ອງວ່າການແຂວງ ເພື່ອຊ່ວຍວຽກງານຂອງແຂວງ, ທ່ານ ນາງ ຄຳແດງ ກອງຈຳປາ ຫົວໜ້າພະແນກພາຍໃນ ມາປະຈຳການຢູ່ຄະນະຈັດຕັ້ງແຂວງ; ແຕ່ງຕັ້ງບັນດາຫົວໜ້າພະແນກການ 4 ທ່ານ ດັ່ງນີ້: ທ່ານ ປອ. ຈັນພີພັກ ກອງຈຳປາ ກຳມະການພັກແຂວງ ເປັນຫົວໜ້າພະແນກການເງິນ, ທ່ານພົມແກ້ວ ທຳລະສິນ ກຳມະການພັກແຂວງ ເປັນຫົວໜ້າພະແນກກະສິກຳ ແລະ ສິ່ງແວດລ້ອມ, ທ່ານ ນາງ ບົວວັນ ພົມມະລິດ ກຳມະການພັກແຂວງ ເປັນຫົວໜ້າພະແນກເຕັກໂນໂລຊີ ແລະ ການສື່ສານ, ທ່ານ ປອ. ຄຳແກ້ວ ຈັນທະວົງ ຮອງຫົວໜ້າພະແນກອຸດສາຫະກຳ ແລະ ການຄ້າ ເປັນຫົວໜ້າພະແນກອຸດສາຫະກຳ ແລະ ການຄ້າ.

## ຄົ້ນຄວ້າໜັງສືສະເໜີຂອງທ່ານເຈົ້າແຂວງ 3 ສະບັບ



(ສພຂ)-ກອງປະຊຸມຄະນະປະຈຳສະພາປະຊາຊົນແຂວງ (ຄປຈສພຂ) ອຸດົມໄຊ ປະຈຳເດືອນມິຖຸນາ2025 ໄດ້ຈັດຂຶ້ນໃນຕອນບ່າຍວັນທີ 1 ກໍລະກົດຜ່ານມາ ໂດຍການເປັນປະທານຂອງທ່ານ ຄຳດີ ວົງລ້ອມ ຮອງເລຂາພັກແຂວງ, ປະທານສະພາປະຊາຊົນແຂວງ ເຊິ່ງມີບັນດາທ່ານຮອງປະທານຄະນະກຳມະການ ແລະ ຄະນະເລຂາທິການ ສພຂ, ພະແນກການທີ່ກ່ຽວຂ້ອງຂອງແຂວງ, ແລະ ພະນັກງານທີ່ກ່ຽວຂ້ອງ ເຂົ້າຮ່ວມ.

ໃນກອງປະຊຸມ, ທ່ານ ທອງໄຊທໍ່ຈົ່ງເລ່ຍຈື່ປະທານຄະນະກຳມະການເສດຖະກິດ, ແຜນການແລະການເງິນ ໄດ້ຜ່ານບົດລາຍງານ ແລະການຄົ້ນຄວ້າໜັງສືສະເໜີຂອງທ່ານເຈົ້າແຂວງ 3 ສະບັບ ຄື: ສະເໜີພິຈາລະນາຮັບຮອງເອົາແຜນການນຳໃຊ້ງົບປະມານການລົງທຶນຂອງລັດ (ຮ້ອງກອງທຶນບູລະນະຮັກສາ ແລະ ສ້ອມແປງທາງຫຼວງທ້ອງຖິ່ນ) ປະຈຳປີ2025ຂອງແຂວງອຸດົມໄຊລວມທັງໝົດ52 ໂຄງການ, ມູນຄ່າ6 ຕື້ກີບ; ສະເໜີຍົກເລີກ ແລະ ອວ່າຍທຶນໂຄງ ການຂອງລັດປີ 2025; ຂໍພິຈາລະນາອອກມະຕິຕົກລົງວ່າດ້ວຍການຫັນປ່ຽນປະເພດທີ່ດິນປຸກສ້າງທີ່ຢູ່ອາໄສ, ດິນປຸກສ້າງໂຮງຮຽນ ແລະ ດິນອຸດສາຫະກຳ ເພື່ອສ້າງຕັ້ງໂຮງງານຢູ່ເມືອງຮຸນ ແລະ ເມືອງໄຊ ຈຳນວນ 23 ຕອນ, ເນື້ອທີ່ 19.31 ເຮັກຕາ. ຈາກນັ້ນ, ບັນດາທ່ານ ຄປຈສພຂ ໄດ້ມີຄຳເຫັນແລກປ່ຽນ, ຊັກຖາມເພີ່ມຕື່ມ ແລະ ພະແນກການທີ່ກ່ຽວຂ້ອງຂອງແຂວງ ກໍໄດ້ຊີ້ແຈງໃຫ້ຂໍ້ມູນຢ່າງກົງໄປກົງມາ, ທັງນີ້ກໍເພື່ອຮັບປະກັນການຈັດຕັ້ງປະຕິບັດວຽກງານໃຫ້ມີຄວາມຖືກຕ້ອງຕາມພາລະບົດບາດ, ສິດ ແລະ ໜ້າທີ່ ທີ່ກຳນົດໄວ້ໃນລະບຽບການ ແລະ ກົດໝາຍ.

ນອກຈາກນີ້, ຍັງໄດ້ຜ່ານຮ່າງສະຫຼຸບຕີລາຄາຄືນການເຄື່ອນໄຫວວຽກງານປະຈຳເດືອນມິຖຸນາ, ທິດທາງແຜນ ການປະຈຳເດືອນກໍລະກົດ 2025 ຂອງ ຄປຈສພຂ ແລະ ປຶກສາຫາລືວຽກງານພົ້ນເດັ່ນອີກຈຳນວນໜຶ່ງ.

## ສພຂ ຫົວພັນ ຮັບຮອງການປັບປຸງກົງຈັກການຈັດຕັ້ງ



(ສພຂ) - ກອງປະຊຸມສະໄໝວິສາມັນເທື່ອທີ 1 ຂອງສະພາປະຊາຊົນແຂວງຫົວພັນ ຊຸດທີ II ໄດ້ເປີດຂຶ້ນ ແລະ ອັດລົງດ້ວຍຜົນສຳເລັດຢ່າງຈົບງາມ ເມື່ອວັນຈັນທີ 30 ມິຖຸນາຜ່ານມາ ໂດຍການເປັນປະທານຂອງທ່ານ ຄອນປະພັນ ເລືອງສີຈັນທອງ ຄະນະປະຈຳພັກແຂວງ, ປະທານສະພາປະຊາຊົນແຂວງ ເຊິ່ງມີບັນດາທ່ານການນຳຂັ້ນສູງຂອງອົງການຈັດຕັ້ງພັກ-ລັດຂັ້ນແຂວງ, ສະມາຊິກສະພາປະຊາຊົນແຂວງ (ສສຂ)ປະຈຳເຂດເລືອກຕັ້ງ10 ເມືອງ ແລະແຂກຮັບເຊີນ ເຂົ້າຮ່ວມຢ່າງພ້ອມພຽງ.

ໃນວາລະກອງປະຊຸມ, ທ່ານ ສົມສັກ ດອນຈານິດ ກຳມະການພັກແຂວງ,ຮອງປະທານສະພາປະຊາຊົນແຂວງ ໄດ້ຂຶ້ນຜ່ານໜັງສືສະເໜີຂອງທ່ານເຈົ້າແຂວງ ວ່າດ້ວຍການສະເໜີປັບປຸງກົງຈັກການຈັດຕັ້ງຂອງອົງການປົກຄອງແຂວງ; ຈາກນັ້ນ, ບັນດາທ່ານ ສສຂ ໄດ້ສຸມໃສ່ປະກອບຄຳຄິດຄຳເຫັນ ພ້ອມທັງຮັບຮອງເອົາດ້ວຍຄະແນນສຽງເຫັນດີເປັນເອກະພາບ 100% ຂອງຈຳນວນ ສສຂ ທີ່ເຂົ້າຮ່ວມ ເຊິ່ງການປັບປຸງກົງຈັກການຈັດຕັ້ງຂອງອົງການປົກຄອງແຂວງມີດັ່ງນີ້:

1. ໂຮມພະແນກແຜນການ ແລະ ການລົງທຶນ ເຂົ້າກັບພະແນກການເງິນເອີ້ນຊື່ວ່າ: ພະແນກການເງິນ.

2. ໂຮມພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ເຂົ້າກັບພະແນກກະສິກຳ ແລະ ປ່າໄມ້ ເອີ້ນຊື່ວ່າ: ພະແນກກະສິກຳແລະສິ່ງແວດລ້ອມ.

3. ໂຮມພະແນກພະລັງງານແລະບໍ່ແຮ່ເຂົ້າກັບພະແນກອຸດສາຫະກຳ ແລະການຄ້າ ເອີ້ນຊື່ວ່າ: ພະແນກອຸດສາຫະກຳ ແລະ ການຄ້າ.

4. ໂຮມພະແນກພາຍໃນ ເຂົ້າກັບຄະນະຈັດຕັ້ງ ແລະ ຫ້ອງວ່າການ ໂດຍເອົາວຽກງານຄຸ້ມຄອງພະນັກງານ-ລັດຖະກອນ, ວຽກງານພັດທະນາກົງຈັກການຈັດຕັ້ງ, ວຽກງານປົກຄອງທ້ອງຖິ່ນ, ວຽກງານແຂ່ງຂັນ-ຍ້ອງຍໍ, ວຽກງານຄຸ້ມຄອງພະລາກອນ ແລະວຽກງານອື່ນໆທີ່ສອດຄ່ອງກັບພາລະບົດບາດຂອງຄະນະຈັດຕັ້ງ ພ້ອມທັງຍົກຍ້າຍບຸກຄະລາກອນທີ່ເຮັດວຽກງານດັ່ງກ່າວ ໄປເຂົ້າກັບຄະນະຈັດຕັ້ງແຂວງ; ໂອນວຽກງານແຜນທີ່, ວຽກງານສາສະໜາ, ວຽກງານເອກະສານ ແລະ ວຽກງານອື່ນໆ ພ້ອມທັງບຸກຄະລາກອນທີ່ເຮັດວຽກຂົງເຂດດັ່ງກ່າວ ໄປຂຶ້ນກັບຫ້ອງວ່າການແຂວງ ແລະ ຍົກຍ້າຍວຽກງານຄຸ້ມຄອງພົນລະເມືອງພ້ອມທັງບຸກຄະລາກອນ ເຂົ້າກັບກອງບັນຊາການປ້ອງກັນຄວາມສະຫງົບແຂວງ; ວຽກງານຫັນຫົວໜ່ວຍວິຊາການເປັນເຈົ້າຕົນເອງພ້ອມທັງບຸກຄະລາກອນ ໄປຂຶ້ນກັບພະແນກການເງິນ ແລະ ອົງການອື່ນທີ່ເຫັນວ່າມີຄວາມສອດຄ່ອງ.

5. ໂອນວຽກງານສື່ມວນຊົນ (ຖະແຫຼງຂ່າວ) ພ້ອມທັງຍົກຍ້າຍບຸກຄະລະກອນທີ່ເຮັດວຽກງານດັ່ງກ່າວ ໄປຂຶ້ນກັບຄະນະໂຄສະນາອົບຮົມແຂວງ ປ່ຽນຊື່ພະແນກຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ເປັນຊື່ໃໝ່ເອີ້ນວ່າ: ພະແນກວັດທະນະທຳ ແລະ ການທ່ອງທ່ຽວ.

ກອງປະຊຸມມອບໃຫ້ອົງການປົກຄອງແຂວງ ສົມທົບກັບຄະນະຮັບຜິດຊອບປັບປຸງກົງຈັກການຈັດຕັ້ງຂັ້ນແຂວງແລະພາກສ່ວນກ່ຽວຂ້ອງ ນຳພາການປັບປຸງກົງຈັກການຈັດຕັ້ງຂອງອົງການປົກຄອງແຂວງ ໃຫ້ສຳເລັດພາຍໃນເດືອນກໍລະກົດນີ້; ໃນການປັບປຸງກົງຈັກການຈັດຕັ້ງຂັ້ນແຂວງດັ່ງກ່າວ ແມ່ນໃຫ້ສຸມໃສ່ຄົ້ນຄວ້າ, ເລືອກເຟັ້ນ, ສັບຊ້ອນ, ຈັດວາງພະນັກງານ-ລັດຖະກອນຄືນໃໝ່ ຢ່າງຮັດກຸມ ແລະ ເປັນລະບົບ ພ້ອມທັງເອົາໃຈໃສ່ນຳພາການສຶກສາອົບຮົມການເມືອງ-ແນວຄິດໃຫ້ພະນັກງານ-ລັດຖະກອນ ມີຄວາມຮັບຮູ້, ເຂົ້າໃຈ ແລະ ເປັນເອກະພາບ ພ້ອມກັນຈັດຕັ້ງປະຕິບັດໃຫ້ໄດ້ຮັບຜົນສຳເລັດຕາມແຜນການວາງໄວ້.

## ຄປຈສພຂ ຫຼວງນ້ຳທາ ປະຊຸມປະຈຳເດືອນ 6




(ສພຂ) - ກອງປະຊຸມຄະນະປະຈຳສະພາປະຊາຊົນແຂວງ (ຄປຈສພຂ) ຫຼວງນ້ຳທາ ປະຈຳເດືອນມິຖຸນາ2025 ໄດ້ຈັດຂຶ້ນເມື່ອວັນອາທິດທີ 29 ມິຖຸນາຜ່ານມາ ພາຍໃຕ້ການເປັນປະທານຂອງທ່ານ ຄຳຟອງ ອິນມານີ ຮອງເລ ຂາພັກແຂວງ, ປະທານສະພາປະຊາຊົນແຂວງ ເຊິ່ງໄດ້ປຶກສາຫາລືກ່ຽວກັບການກະກຽມ ແລະ ດຳເນີນກອງປະຊຸມສະໄໝວິສາມັນເທື່ອທີ 4 ຂອງສະພາປະຊາຊົນແຂວງ ເປັນຕົ້ນ: ດ້ານເນື້ອໃນ, ວຽກບໍລິຫານ, ວຽກງານປົ່ນອ້ອມຕ່າງໆ ແລະ ກອງປະຊຸມສະໄໝສາມັນເທື່ອທີ9 ໂດຍສະເພາະວັນເວລາແລະວາລະກອງປະຊຸມ; ພິຈາລະນາໜັງສືສະເໜີຂອງພະແນກໂຍທາທິການ ແລະ ຂົນສົ່ງ ກ່ຽວກັບການຂໍນຳໃຊ້ທີ່ດິນໂຮງໝໍເກົ່າເພື່ອຕັ້ງແຄ້ມຊົ່ວຄາວໃຫ້ແກ່ບໍລິສັດສ້ອມແປງທາງພາຍໃນເທດສະບານແຂວງ, ພິຈາລະນາໜັງສືສະເໜີຂອງກອງບັນຊາການທະຫານແຂວງຂໍໂຊລາເຊວ 3 ຊຸດ.

# ລາຍງານຜົນການປະເມີນການປະຕິບັດ ຂໍ້ຕົກລົງເຈົ້າແຂວງ 3 ສະບັບ



(ສພຂ) - ວັນທີ 4 ກໍລະກົດຜ່ານມາ, ສະພາປະຊາຊົນແຂວງ (ສພຂ) ຫຼວງນ້ຳທາ ໄດ້ຈັດກອງປະຊຸມລາຍງານຜົນການຈັດຕັ້ງປະຕິບັດຂໍ້ຕົກລົງຂອງເຈົ້າແຂວງ ໂດຍການເປັນປະທານຂອງທ່ານ ກົງເພັດ ແກ້ວບົວພາ ກຳມະການພັກ ແຂວງ, ຮອງປະທານສະພາປະຊາຊົນແຂວງ, ມີບັນດາທ່ານຄະນະປະຈຳ, ຜູ້ຕາງໜ້າ 3 ຄະນະກຳມະການ ແລະ ຄະນະ ເລຂາທິການ ສພຂ, ຫົວໜ້າ-ຮອງຫົວໜ້າພະແນກການ, ອົງການທີ່ກ່ຽວຂ້ອງຂອງແຂວງ ຄື: ຫ້ອງວ່າການ, ພະແນກໂຍທາທິການແລະຂົນສົ່ງ, ພະແນກຊັບພະຍາກອນທຳມະຊາດແລະສິ່ງແວດລ້ອມ, ພະແນກການເງິນ ລວມຜູ້ເຂົ້າຮ່ວມທັງໝົດ 14 ທ່ານ.

ກອງປະຊຸມໄດ້ຜ່ານບົດລາຍງານການປະເມີນຜົນການຈັດຕັ້ງປະຕິບັດຂໍ້ຕົກລົງຂອງເຈົ້າແຂວງ ວ່າດ້ວຍການຄຸ້ມຄອງສິ່ງປຸກສ້າງ ແລະ ສະຫງວນທາງພາຍໃນຕົວເມືອງ ສະບັບເລກທີ 306/ຈຂ, ລົງວັນທີ 22 ເມສາ 2019, ຂໍ້ຕົກລົງຂອງເຈົ້າແຂວງ ວ່າດ້ວຍການຄຸ້ມຄອງລາຍຮັບ-ລາຍຈ່າຍງົບປະມານຂັ້ນແຂວງ, ຂັ້ນເມືອງ ແລະ ຂັ້ນບ້ານ ສະບັບເລກ ທີ 24/ຈຂ, ລົງວັນທີ 8 ມັງກອນ 2021, ຂໍ້ຕົກລົງຂອງເຈົ້າແຂວງວ່າດ້ວຍກຳນົດຂອບເຂດປະເມີນລາຄາທີ່ດິນຢູ່ພາຍໃນແຂວງ ສະບັບເລກທີ 25/ຈຂ, ລົງວັນທີ 8 ມັງກອນ 2021 ເພື່ອຕີລາຄາຄືນຜົນຂອງການຈັດຕັ້ງປະຕິບັດໃນໄລຍະຜ່ານມາ ພ້ອມທັງປະກອບຄຳຄິດຄຳເຫັນ, ເຈາະຈີ້ມບາງບັນຫາຂໍ້ຄົງຄ້າງຕ່າງໆ; ທັງນີ້, ກໍເພື່ອຍົກສູງຄຸນນະພາບການ ຈັດຕັ້ງປະຕິບັດໃນຕໍ່ໜ້າໃຫ້ດີຂຶ້ນກວ່າເກົ່າ.

**(ອາເມີງ ວີແຄລູ)**

# ກອງປະຊຸມສະໄໝວິສາມັນເທື່ອທີ 2 ສພຂ ບໍລິຄຳໄຊ




(ສພຂ) - ຕອນບ່າຍວັນຈັນທີ 30 ມິຖຸນາຜ່ານມາ, ສະພາປະຊາຊົນແຂວງ (ສພຂ) ບໍລິຄຳໄຊ ໄດ້ດຳເນີນກອງປະຊຸມສະໄໝວິສາມັນເທື່ອທີ2 ໂດຍການເປັນປະທານຂອງທ່ານ ປອ. ສຸວັນນີ ໄຊຊະນະ ຮອງເລຂາພັກແຂວງ, ປະທານສະພາປະຊາຊົນແຂວງ, ມີບັນດາທ່ານການນຳພັກ-ລັດ, ແນວລາວສ້າງຊາດ, ສະຫະພັນນັກຮົບເກົ່າ, ອົງການຈັດຕັ້ງມະຫາຊົນຂັ້ນແຂວງແລະແຂກຖືກເຊີນ ເຂົ້າຮ່ວມຢ່າງພ້ອມພຽງ ເຊິ່ງກອງປະຊຸມໄດ້ສຸມໃສ່ຄົ້ນຄວ້າ, ປະກອບຄຳເຫັນ ແລະ ພິຈາລະນາຮັບຮອງເອົາການປັບປຸງກົງຈັກການຈັດຕັ້ງຂອງແຂວງ ຄື:

1. ໂຮມພະແນກແຜນການ ແລະ ການລົງທຶນ ເຂົ້າກັບພະແນກການເງິນເອີ້ນຊື່ວ່າ: ພະແນກການເງິນ.

2. ໂຮມພະແນກພະລັງງານແລະບໍ່ແຮ່ເຂົ້າກັບພະແນກອຸດສາຫະກຳ ແລະການຄ້າ ເອີ້ນຊື່ວ່າ: ພະແນກອຸດ ສາຫະກຳ ແລະ ການຄ້າ.

3. ໂຮມພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ເຂົ້າກັບພະແນກກະສິກຳ ແລະ ປ່າໄມ້ ເອີ້ນຊື່ວ່າ: ພະແນກກະສິກຳແລະສິ່ງແວດລ້ອມ.

4. ໂຮມພະແນກພາຍໃນ ຂຶ້ນກັບຄະນະຈັດຕັ້ງແຂວງ ເອົາວຽກຄຸ້ມຄອງລັດຖະກອນ, ວຽກແຂ່ງຂັນຍ້ອງຍໍ ແລະ ວຽກອື່ນໆທີ່ສອດຄ່ອງກັບພາລະບົດບາດຂອງຄະນະຈັດຕັ້ງແຂວງ ພ້ອມທັງຍົກຍ້າຍບຸກຄະລາກອນທີ່ເຮັດວຽກດັ່ງກ່າວ ໄປເຂົ້າກັບຄະນະຈັດຕັ້ງແຂວງ; ໂອນວຽກປົກຄອງ, ວຽກແຜນທີ່, ວຽກຄຸ້ມຄອງມະຫາພາກດ້ານສາສະໜາ ແລະ ວຽກອື່ນໆ ພ້ອມທັງບຸກຄະລາກອນທີ່ເຮັດວຽກຂົງເຂດດັ່ງກ່າວ ໄປຂຶ້ນກັບຫ້ອງວ່າການແຂວງ ແລະ ອົງການອື່ນທີ່ເຫັນວ່າມີຄວາມສອດຄ່ອງກັບກະຊວງສາຍຕັ້ງທີ່ມີການປັບປຸງ.

5. ໂອນວຽກສື່ມວນຊົນ, ວຽກຖະແຫຼງຂ່າວ ພ້ອມທັງຍົກຍ້າຍບຸກຄະລາກອນທີ່ເຮັດວຽກດັ່ງກ່າວ ໄປຂຶ້ນກັບຄະນະໂຄສະນາອົບຮົມແຂວງ; ປ່ຽນຊື່ພະແນກຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ເປັນຊື່ໃໝ່ເອີ້ນວ່າ: ພະແນກວັດທະນະທຳ ແລະ ການທ່ອງທ່ຽວ.

6. ການປັບປຸງກົງຈັກການຈັດຕັ້ງຂອງສະພາປະຊາຊົນແຂວງ ແມ່ນມອບໃຫ້ຄະນະປະຈຳສະພາປະຊາຊົນແຂວງ ສົມທົບກັບຄະນະປະຈຳສະພາແຫ່ງຊາດ ປັບປຸງໄປຕາມທິດຂອງສະພາແຫ່ງຊາດ ແລ້ວລາຍງານໃຫ້ຄະນະປັບປຸງກົງຈັກຂັ້ນແຂວງຮັບຊາບ.

**(ໂສລະຢ໋າ ແລະ ລະອອງດາວ)**

# ສພຂ ໄຊຍະບູລີ ທາບທາມຮ່າງແຜນການ 5 ປີ ຄັ້ງທີ VIII




(ສພຂ) - ກອງປະຊຸມສະໄໝວິສາມັນເທື່ອທີ 1 ຂອງສະພາປະຊາຊົນແຂວງ (ສພຂ) ໄຊຍະບູລີ ຊຸດທີ II ໄດ້ ໄຂຂຶ້ນ ແລະ ອັດລົງດ້ວຍຜົນສຳເລັດຢ່າງຈົບງາມ ໃນຕອນບ່າຍວັນທີ30 ມິຖຸນາຜ່ານມາ ທີ່ຫ້ອງປະຊຸມໃຫຍ່ຂອງແຂວງ ໂດຍການເປັນປະທານຂອງທ່ານ ເພັງນິລັນ ຄຳພັນເພັງ ຮອງເລຂາພັກແຂວງ, ປະທານສະພາປະຊາຊົນແຂວງ, ມີ ທ່ານ ດວງຕາ ໄຊວຸດ ຮອງເລຂາພັກແຂວງ ພ້ອມດ້ວຍການນຳພັກ-ລັດ, ແນວລາວສ້າງຊາດ, ສະຫະພັນນັກຮົບເກົ່າ, 3 ອົງການຈັດຕັ້ງມະຫາຊົນ ແລະ ແຂກຮັບເຊີນ ເຂົ້າຮ່ວມຢ່າງພ້ອມພຽງ; ເຊິ່ງກອງປະຊຸມໄດ້ພິຈາລະນາຮັບຮອງເອົາການປັບປຸງກົງຈັກການຈັດຕັ້ງຂອງອົງການປົກຄອງແຂວງ ແລະ ທາບທາມຮ່າງແຜນພັດທະນາເສດຖະກິດ-ສັງຄົມຂອງ ແຂວງ 5 ປີ ຄັ້ງທີ VIII (2026-2030).

ກອງປະຊຸມຄັ້ງນີ້, ບັນດາທ່ານສະມາຊິກສະພາປະຊາຊົນແຂວງ (ສສຂ) ໄດ້ປະກອບຄຳຄິດຄຳເຫັນແລະຮັບຟັງການຊີ້ແຈງຂອງພະແນກການທີ່ກ່ຽວຂ້ອງ ຢ່າງພາວະວິໄສ ແລະ ກົງໄປກົງມາຕໍ່ແຕ່ລະບັນຫາທີ່ໄດ້ຍົກຂຶ້ນ; ພ້ອມດຽວກັນ, ປະທານກອງປະຊຸມຍັງໄດ້ຮຽກຮ້ອງມາຍັງຄະນະປະຈຳສະພາປະຊາຊົນແຂວງ, ຄະນະກຳມະການທີ່ກ່ຽວຂ້ອງ, ຄະນະ ສສຂ ປະຈຳເຂດເລືອກຕັ້ງເມືອງ, ອົງການປົກຄອງແຂວງ ແລະ ເມືອງ, ແລະ ທຸກພາກສ່ວນທີ່ກ່ຽວຂ້ອງ ຈົ່ງຍົກສູງຄວາມຮັບຜິດຊອບໃນການຈັດຕັ້ງຜັນຂະຫຍາຍເນື້ອໃນກອງປະຊຸມຄັ້ງນີ້ ໃຫ້ບັນລຸຜົນສຳເລັດຕາມລະດັບຄາດໝາຍທີ່ວາງໄວ້.

**(ອິນທີ ຊຽວສີຟ້າ)**

# ມອບ-ຮັບ ເຄື່ອງຊ່ວຍເຫຼືອປະຊາຊົນບ້ານຜົ້ງຊາຍ ເມືອງຊຽງຄໍ້



(ສພຂ) - ວັນສຸກທີ 4 ກໍລະກົດຜ່ານມາ ທີ່ສະພາປະຊາຊົນແຂວງຫົວພັນ ໄດ້ມີພິທີມອບ-ຮັບເຄື່ອງຊ່ວຍເຫຼືອ ຈາກບໍລິສັດ ໄລວັນ ກໍ່ສ້າງຂົວທາງ ຈຳກັດຜູ້ດຽວ ເພື່ອໄປຊ່ວຍເຫຼືອຄອບຄົວປະຊາຊົນທີ່ປະສົບໄພນ້ຳຖ້ວມ ຢູ່ບ້ານຜົ້ງຊາຍ ເມືອງຊຽງຄໍ້ ເຊິ່ງກ່າວມອບໂດຍທ່ານນາງ ພູເງິນ ໂພທິສານ ອຳນວຍການບໍລິສັດດັ່ງກ່າວ, ກ່າວຮັບ ແລະ ສະແດງຄວາມຂອບໃຈ ໂດຍທ່ານ ພັອ. ທອງພັນ ພັດທະວົງ ປະທານຄະນະກຳມະການຍຸຕິທຳ ແລະປກຊ-ປກສ; ເຄື່ອງທີ່ ມອບຄັ້ງນີ້ ມີເຂົ້າສານ, ຜ້າຫົ່ມ, ໄຂ່, ໝໍ້, ໝີ່ສຳເລັດຮູບ, ປາກະປ໋ອງ ລວມມູນຄ່າ 28 ລ້ານກີບ.

ໃນວັນຕໍ່ມາ, ທ່ານ ປອ. ຄອນເສີດ ດອນວິໄຊ ເລຂາທິການສະພາປະຊາຊົນແຂວງສົມທົບກັບສະມາຊິກສະພາປະຊາຊົນແຂວງປະຈຳເຂດເລືອກຕັ້ງເມືອງຊຽງຄໍ້ ໄດ້ນຳເອົາເຄື່ອງດັ່ງກ່າວ ໄປມອບໃຫ້ປະຊາຊົນບ້ານຜົ້ງຊາຍ ທີ່ໄດ້ ຮັບຜົນກະທົບຈາກໄພນ້ຳຖ້ວມກະທັນຫັນເມື່ອວັນທີ 2 ກໍລະກົດ ເຊິ່ງເຮັດໃຫ້ເຄື່ອງຂອງຕ່າງໆພາຍໃນເຮືອນໄດ້ຮັບຄວາມເສຍຫາຍ ແລະ ໄຮ່ນາຮົ້ວສວນຖືກນ້ຳເຊາະເຈື່ອນ.



# ກອງປະຊຸມສະໄໝວິສາມັນເທື່ອທີ 1 ສພຂ ວຽງຈັນ




(ສພຂ) - ກອງປະຊຸມສະໄໝວິສາມັນເທື່ອທີ 1 ຂອງສະພາປະຊາຊົນແຂວງ (ສພຂ) ວຽງຈັນ ຊຸດທີ II ໄຂຂຶ້ນໃນວັນທີ30 ມິຖຸນາຜ່ານມາ ໂດຍການເປັນປະທານຂອງທ່ານ ບຸນສອນ ເຜີດລາວັນ ຮອງເລຂາພັກແຂວງ, ປະທານສະພາປະຊາຊົນແຂວງ, ມີບັນດາທ່ານການນຳ ແລະ ພະແນກການ-ອົງການຈັດຕັ້ງພັກ-ລັດຂອງແຂວງ ເຂົ້າຮ່ວມ; ກອງປະຊຸມໄດ້ພິຈາລະນາຮັບຮອງເອົາການປັບປຸງກົງຈັກການຈັດຕັ້ງໃນການໂຮມ, ໂອນ, ຍຸບເລີກບາງພະແນກການ, ອົງການຂັ້ນແຂວງແລະຫ້ອງການຂັ້ນເມືອງໃນທົ່ວແຂວງຕາມໜັງສືສະເໜີຂອງເຈົ້າແຂວງວຽງຈັນ.

ທ່ານ ນາງ ຈັນທະບູນ ໂພສະລາດ ຫົວໜ້າຄະນະຈັດຕັ້ງແຂວງ ໄດ້ຜ່ານມະຕິຕົກລົງຂອງສະພາປະຊາຊົນແຂວງ ວ່າດ້ວຍການຮັບຮອງເອົາການປັບປຸງກົງຈັກການຈັດຕັ້ງແຂວງ ແລະເມືອງ ຄື: 1. ໂຮມພະແນກແຜນການ ແລະ ການລົງທຶນ ເຂົ້າກັບພະແນກການເງິນ ເປັນພະແນກການເງິນ; 2. ໂຮມພະແນກພະລັງງານ ແລະ ບໍ່ແຮ່ ເຂົ້າກັບພະແນກອຸດສາຫະກຳ ແລະ ການຄ້າ ເປັນພະແນກອຸດສາຫະກຳແລະການຄ້າ; 3. ໂຮມພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ເຂົ້າກັບພະແນກກະສິກຳ ແລະ ປ່າໄມ້ ເປັນພະແນກກະສິກຳ ແລະ ສິ່ງແວດລ້ອມ; 4. ໂຮມພະແນກພາຍໃນ ພ້ອມທັງຍົກຍ້າຍບຸກຄະລາກອນທີ່ສອດຄ່ອງກັບພາລະບົດບາດ ໄປຂຶ້ນກັບຄະນະຈັດຕັ້ງແຂວງ, ຫ້ອງວ່າການແຂວງແລະພະແນກອື່ນທີ່ກ່ຽວຂ້ອງ ຕາມຂະແໜງສາຍຕັ້ງທີ່ມີການປັບປຸງຢູ່ກະຊວງ-ອົງການ; 5. ໂອນວຽກງານຖະແຫຼງຂ່າວ ພ້ອມທັງຍົກຍ້າຍບຸກຄະລາກອນອອກຈາກພະແນກຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ໄປຂຶ້ນກັບຄະນະໂຄສະນາອົບຮົມແຂວງ ແລ້ວປ່ຽນຊື່ຈາກພະແນກຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ເປັນພະແນກວັດທະນະທຳແລະການທ່ອງທ່ຽວ. ສຳລັບບັນດາຫ້ອງການ, ອົງການທີ່ຢູ່ຂັ້ນເມືອງ ໃຫ້ພ້ອມກັນຈັດຕັ້ງປະຕິບັດຄືກັບຢູ່ຂັ້ນແຂວງ ທັງສຸມໃສ່ການຄົ້ນຄວ້າ, ເລືອກເຟັ້ນ, ຊັບຊ້ອນ, ຈັດວາງພະນັກງານ-ລັດຖະກອນຄືນໃໝ່ຢ່າງຮັດກຸມ ແລະ ເປັນລະບົບ.

ຜູ້ແທນກອງປະຊຸມໄດ້ຮັບຮອງເອົາມະຕິດັ່ງກ່າວ ດ້ວຍຄະແນນສຽງເຫັນດີ 97%.

**(ເພຈ: ແຂວງວຽງຈັນໂພສ໌ Vieng Chanh Posted)**

# ຄສຂ ປະຈຳເຂດເລືອກຕັ້ງເມືອງທ່າພະບາດ ສະຫຼຸບວຽກງານ 6 ເດືອນຕົ້ນປີ 2025




(ສພຂ) - ກອງປະຊຸມສະຫຼຸບວຽກງານປະຈຳ6ເດືອນຕົ້ນປີ ແລະ ທິດທາງແຜນການປະຈຳ 6 ເດືອນທ້າຍປີ 2025 ຂອງຄະນະສະມາຊິກສະພາປະຊາຊົນແຂວງ (ຄສຂ) ບໍລິຄຳໄຊ ປະຈຳເຂດເລືອກຕັ້ງເມືອງທ່າພະບາດ ໄດ້ຈັດຂຶ້ນໃນຕອນບ່າຍວັນທີ 24 ມິຖຸນາຜ່ານມາ ທີ່ຫ້ອງປະຊຸມປົກຄອງເມືອງ ໂດຍການເປັນປະທານຂອງທ່ານ ສະຫວັນເພັດ ຈັນທະວົງສາ ຮອງເລຂາພັກເມືອງ, ປະທານຄະນະສະມາຊິກສະພາປະຊາຊົນແຂວງປະຈຳເຂດເລືອກຕັ້ງເມືອງ; ມີທ່ານ ໃສຄຳ ທອງລັດ ກຳມະການພັກແຂວງ, ຮອງປະທານສະພາປະຊາຊົນແຂວງ, ບັນດາຄະນະປະຈຳ ແລະ ກຳມະການພັກເມືອງ, ຫົວໜ້າຫ້ອງການອ້ອມຂ້າງ ຕະຫຼອດຮອດນາຍບ້ານ 26 ບ້ານທົ່ວເມືອງທ່າພະບາດ ເຂົ້າຮ່ວມຢ່າງພ້ອມພຽງ.

ກອງປະຊຸມໄດ້ຮັບຟັງຮ່າງບົດສະຫຼຸບການເຄື່ອນໄຫວຂອງ ຄວຂ ປະຈຳ 6 ເດືອນຕົ້ນປີ ແລະ ທິດທາງແຜນການປະຈຳ6ເດືອນທ້າຍປີ2025, ລາຍງານການແກ້ໄຂບັນຫາຂອງບາງຂະແໜງການ; ຈາກນັ້ນ, ຜູ້ເຂົ້າຮ່ວມໄດ້ພ້ອມກັນປະກອບຄຳຄິດເຫັນໃນດ້ານຕ່າງໆທີ່ຂ້ອງຄາໃຈຢ່າງກົງໄປກົງມາ ເຊິ່ງທ່ານປະທານກອງປະຊຸມ ກໍໄດ້ສັງລວມຄຳຄິດເຫັນ ແລະອະທິບາຍຊີ້ແຈງກັບທີ່ຕໍ່ບາງບັນຫາທີ່ສອດຄ່ອງກັບພາລະບົດບາດ, ພ້ອມທັງມອບຄວາມຮັບຜິດຊອບໃຫ້ແຕ່ລະພາກສ່ວນທີ່ກ່ຽວຂ້ອງສົມທົບກັນແກ້ໄຂ.

# ຕິດຕາມ, ຊຸກຍູ້ວຽກງານ ຄສຂ ປະຈຳເຂດເລືອກຕັ້ງ



(ສພຂ)-ວັນທີ16-19 ມິຖຸນາຜ່ານມາ, ທ່ານ ສົມສີ ມະນີນິ້ມ ກຳມະການພັກແຂວງ, ຮອງປະທານປະຊາຊົນແຂວງ (ສພຂ) ຈຳປາສັກ ພ້ອມດ້ວຍຄະນະ ໄດ້ເຄື່ອນໄຫວວຽກງານຢູ່ເມືອງປາກຊ່ອງ, ເມືອງບາຈຽງຈະເລີນສຸກ, ນະຄອນປາກເຊ, ເມືອງຈຳປາສັກ, ເມືອງປະທຸມພອນ, ເມືອງສຸຂຸມາ ແລະ ເມືອງໂຂງ ຕາມລຳດັບ ໂດຍມີຄະນະນຳອົງການປົກຄອງ, ຄະນະສະມາຊິກສະພາປະຊາຊົນແຂວງ (ຄສຂ) ປະຈຳເຂດເລືອກຕັ້ງ, ຄະນະຈັດຕັ້ງ, ຫ້ອງວ່າການ, ຫ້ອງ ການພາຍໃນ ແລະ ພະນັກງານທີ່ກ່ຽວຂ້ອງຂອງເມືອງ-ນະຄອນ ເຂົ້າຮ່ວມເຮັດວຽກ; ຈຸດປະສົງແມ່ນເພື່ອຕິດຕາມ ແລະ ຊຸກຍູ້ການກະກຽມຄວາມພ້ອມດ້ານສະຖານທີ່ເຮັດວຽກ, ບຸກຄະລາກອນທີ່ຈະເປັນເສນາທິການໃຫ້ແກ່ ຄສຂ ປະຈຳເຂດເລືອກບັນດາເມືອງແລະນະຄອນ ຕິດພັນກັບການປະກາດການຈັດຕັ້ງຂອງ ສພຂ.

ໃນການຮ່ວມເຮັດວຽກ, ໄດ້ຮັບຟັງການລາຍງານຈາກຄະນະນຳ ແລະ ຂະແໜງການທີ່ກ່ຽວຂ້ອງຂອງອົງການປົກຄອງຫຼາຍເນື້ອໃນສຳຄັນ ໂດຍລົງເລິກວຽກງານດ້ານບຸກຄະລາກອນ ແລະ ກົນໄກການຈັດຕັ້ງປະຕິບັດວຽກງານ ເຊິ່ງເຫັນວ່າບັນດາເມືອງ ແລະ ນະຄອນ ໄດ້ມີແຜນການກະກຽມຢ່າງລະອຽດໃນການຈັດຕັ້ງປະຕິບັດວຽກງານດັ່ງກ່າວໃນຕໍ່ໜ້າ ທັງນີ້, ກໍເພື່ອຮອງຮັບໃຫ້ແກ່ການຈັດຕັ້ງປະຕິບັດວຽກງານຂອງ ສພຂ ຊຸດທີ III ກໍຄືວຽກງານຂອງ ຄສຂ ປະຈຳເຂດເລືອກຕັ້ງພາຍຫຼັງສຳເລັດການເລືອກຕັ້ງສະມາຊິກສະພາປະຊາຊົນແຂວງຊຸດໃໝ່ ໃນຕົ້ນປີ 2026 ໃຫ້ມີຄວາມພ້ອມຮອບດ້ານ; ຈາກນັ້ນ, ບັນດາຜູ້ເຂົ້າຮ່ວມໄດ້ປະກອບຄຳຄິດເຫັນ ແລະ ແລກປ່ຽນບົດຮຽນ ເພື່ອເຮັດໃຫ້ວຽກງານດັ່ງກາວສາມາດຈັດຕັ້ງປະຕິບັດຢ່າງມີປະສິດທິພາບ, ມີຄວາມຮັບປະກັນຕາມເນື້ອໃນຈຸດປະສົງ ແລະ ມີຜົນສຳເລັດ.

ນອກນີ້, ຍັງໄດ້ຜ່ານມະຕິຂອງຄະນະປະຈຳສະພາປະຊາຊົນແຂວງ ວ່າດ້ວຍການແຕ່ງຕັ້ງທ່ານ ນາງ ບອນຄຳ ເວິ່ນໂພຄຳ ຫົວໜ້າ ຄສຂ ປະຈຳເຂດເລືອກຕັ້ງເມືອງປາກຊ່ອງ ແລະ ທ່ານ ນາງ ທອງລຽນ ສຸລະທາທອນ ຫົວໜ້າ ຄສຂ ປະຈຳເຂດເລືອກຕັ້ງເມືອງບາຈຽງຈະເລີນສຸກ ເປັນຮອງປະທານຄະນະກຳມະການຍຸຕິທຳແລະປ້ອງກັນຊາດ-ປ້ອງກັນຄວາມສະຫງົບ, ທ່ານ ດຣ. ນາງ ພົງພັນ ວິລະພັນ ຫົວໜ້າ ຄສຂ ປະຈຳເຂດເລືອກຕັ້ງນະຄອນປາກເຊ ເປັນຮອງປະທານຄະນະກຳມະການວັດທະນະທຳ-ສັງຄົມ ແລະ ບັນດາເຜົ່າ, ທ່ານ ສີຈະເລີນໄຊ ສີລາເພັດ ຫົວໜ້າ ຄສຂ ປະຈຳເຂດເລືອກຕັ້ງເມືອງຈຳປາສັກ ເປັນຮອງປະທານຄະນະກຳມະການເສດຖະກິດ, ແຜນການ ແລະ ການເງິນ.

**(ສົມວິຈິດ ໄຊມິນຕີ)**

# ຮັບຮອງການປັບປຸງກົງຈັກການຈັດຕັ້ງ ອົງການປົກຄອງແຂວງສາລະວັນ




(ສພຂ) - ກອງປະຊຸມຄະນະປະຈຳສະພາປະຊາຊົນແຂວງສາລະວັນ (ຄປຈສພຂ) ປະຈຳເດືອນມິຖຸນາ2025 ໄດ້ຈັດຂຶ້ນເມື່ອວັນທີ 30 ມິຖຸນາຜ່ານມາ ໂດຍການເປັນປະທານຂອງທ່ານ ສີເຮັ່ງ ຫອມສົມບັດ ຮອງເລຂາພັກແຂວງ, ປະທານຄະນະປະຈຳສະພາປະຊາຊົນແຂວງ;ເຂົ້າຮ່ວມມີທ່ານ ນາງ ບຸນທະວີ ດວງລາສີ ຮອງເລຂາພັກແຂວງ, ຜູ້ຊີ້ນຳວຽກງານພັກ-ພະນັກງານ ທັງເປັນຮອງຫົວໜ້າຄະນະຮັບຜິດຊອບປັບປຸງກົງຈັກການຈັດຕັ້ງຂັ້ນແຂວງ, ບັນດາທ່ານຄະນະປະຈຳພັກແຂວງ, ຄປຈສພຂ, ຫົວໜ້າພະແນກການທີ່ກ່ຽວຂ້ອງອ້ອມຂ້າງແຂວງ ແລະ ພາກສ່ວນທີ່ກ່ຽວຂ້ອງ.

ທີ່ປະຊຸມ, ທ່ານ ແຫວນເພັດ ລັດດາວົງ ຄະນະປະຈຳພັກແຂວງ, ຫົວໜ້າຄະນະຈັດຕັ້ງແຂວງ ໄດ້ລາຍງານຄວາມຄືບໜ້າການກະກຽມປັບປຸງກົງຈັກການຈັດຕັ້ງແລະບຸກຄະລາກອນຂອງແຂວງ, ຜ່ານໜັງສືສະເໜີຂອງອົງ ການປົກຄອງແຂວງກ່ຽວກັບການປັບປຸງກົງຈັກການຈັດຕັ້ງຂອງບັນດາພະແນກການ-ອົງການທຽບເທົ່າ; ຈາກນັ້ນ, ກອງປະຊຸມໄດ້ຜ່ານຮ່າງມະຕິວ່າດ້ວຍການພິຈາລະນາຮັບຮອງເອົາການປັບປຸງກົງຈັກການຈັດຕັ້ງຂອງອົງການປົກຄອງແຂວງ ເຊິ່ງບັນດາທ່ານໃນ ຄປຈສພຂ ໄດ້ຄົ້ນຄວ້າ, ປະກອບຄຳຄິດຄຳເຫັນຢ່າງເປັນເຈົ້າການ ແລະ ລົງຄະແນນສຽງເປັນເອກະພາບ 100% ຮັບຮອງເອົາຮ່າງມະຕິດັ່ງກ່າວ. ການປັບປຸງກົງຈັກການຈັດຕັ້ງຂອງອົງການປົກຄອງແຂວງ ມີດັ່ງນີ້:

1. ໂຮມພະແນກແຜນການ ແລະ ການລົງທຶນ ເຂົ້າກັບພະແນກການເງິນ ເປັນພະແນກການເງິນ;

2. ໂຮມພະແນກພະລັງງານແລະບໍ່ແຮ່ເຂົ້າກັບພະແນກອຸດສາຫະກຳ ແລະການຄ້າ ເປັນພະແນກອຸດສາ ຫະກຳ ແລະ ການຄ້າ;

3. ໂຮມພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ເຂົ້າກັບພະແນກກະສິກຳ ແລະ ປ່າໄມ້ ເປັນພະແນກກະສິກຳ ແລະ ສິ່ງແວດລ້ອມ;

4. ໂຮມພະແນກພາຍໃນ ພ້ອມທັງຍົກຍ້າຍບຸກຄະລາກອນທີ່ສອດຄ່ອງກັບພາລະບົດບາດ ໄປເຂົ້າກັບຄະນະຈັດຕັ້ງແຂວງ, ຫ້ອງວ່າການແຂວງແລະພະແນກອື່ນທີ່ກ່ຽວຂ້ອງ ຕາມຂະແໜງສາຍຕັ້ງທີ່ມີການປັບປຸງຢູ່ກະຊວງ-ອົງການ;

5. ໂອນວຽກຖະແຫຼງຂ່າວ ພ້ອມທັງຍົກຍ້າຍບຸກຄະລາກອນ ອອກຈາກພະແນກຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ໄປຂຶ້ນກັບຄະນະໂຄສະນາອົບຮົມແຂວງ ແລະ ປ່ຽນຊື່ພະແນກຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ເປັນພະແນກວັດທະນະທຳ ແລະ ການທ່ອງທ່ຽວ.

ພ້ອມກັນນັ້ນ, ກອງປະຊຸມຍັງໄດ້ປະກອບຄຳຄິດຄຳເຫັນຢ່າງກົງໄປກົງມາຕໍ່ຮ່າງບົດສະຫຼຸບການເຄື່ອນໄຫວວຽກງານປະຈຳເດືອນມິຖຸນາ ແລະ ວາງທິດທາງແຜນການປະຈຳເດືອນກໍລະກົດ 2025 ຂອງ ຄປຈສພຂ ເພື່ອເຮັດໃຫ້ບົດດັ່ງກ່າວ ມີເນື້ອໃນຄົບຖ້ວນສົມບູນ.

**(ດີລຳພົນ ພົມມະຈັນ)**

# ກອງປະຊຸມສະໄໝວິສາມັນເທື່ອທີ 2 ສພຂ ຈຳປາສັກ




(ສພຂ) - ກອງປະຊຸມສະໄໝວິສາມັນເທື່ອທີ 2 ຂອງສະພາປະຊາຊົນແຂວງ (ສພຂ) ຈຳປາສັກ ຊຸດທີ II ໄດ້ເປີດຂຶ້ນ ແລະ ປິດລົງຢ່າງເປັນທາງການ ເມື່ອວັນອາທິດທີ 29 ມິຖຸນາ ຜ່ານມາ ທີ່ຫ້ອງປະຊຸມຫ້ອງວ່າການແຂວງ ໂດຍການເປັນປະທານຂອງທ່ານ ສາຍທອງ ໄຊຍະວົງ ຮອງເລຂາພັກແຂວງ, ປະທານສະພາປະຊາຊົນແຂວງ; ເຂົ້າຮ່ວມມີທ່ານ ອາລຸນໄຊ ສູນນະລາດ ກຳມະການສູນກາງພັກ, ເລຂາພັກແຂວງ, ເຈົ້າແຂວງຈຳປາສັກ, ບັນດາທ່ານການນຳຂັ້ນສູງ ແລະ ອະດີດການນຳຂັ້ນສູງຂອງພັກ-ລັດຂັ້ນແຂວງ, ສະມາຊິກອົງການປົກຄອງແຂວງ, ສະມາຊິກສະພາປະຊາຊົນແຂວງ (ສສຂ) ປະຈຳ 10 ເຂດເລືອກຕັ້ງ ແລະ ແຂກຮັບເຊີນ.

ໃນວາລະກອງປະຊຸມ, ພາຍຫຼັງທີ່ທ່ານສະນັ່ນ ສີພາພົມມະຈັນ ຫົວໜ້າຄະນະຈັດຕັ້ງແຂວງ ຕາງໜ້າຄະນະຮັບຜິດຊອບປັບປຸງກົງຈັກການຈັດຕັ້ງຂັ້ນແຂວງ ໄດ້ລາຍງານການປັບປຸງກົງຈັກການຈັດຕັ້ງຂອງອົງການປົກຄອງແຂວງ, ທ່ານ ທົບພະສອນ ສະມາເລີກ ເລຂາທິການສະພາປະຊາຊົນແຂວງ ໄດ້ຂຶ້ນຜ່ານຮ່າງມະຕິກອງປະຊຸມຂອງສະພາປະຊາ ຊົນແຂວງ ວ່າດ້ວຍການພິຈາລະນາຮັບຮອງເອົາການປັບປຸງກົງຈັກການຈັດຕັ້ງຂອງອົງການປົກຄອງແຂວງ; ຈາກນັ້ນ, ບັນດາທ່ານ ສສຂ ໄດ້ສຸມໃສ່ປະກອບຄຳຄິດຄຳເຫັນຕໍ່ຮ່າງມະຕິ ພ້ອມທັງຮັບຮອງເອົາດ້ວຍຄະແນນສຽງເຫັນດີ 97.37% ຂອງ ສສຂ ທີ່ເຂົ້າຮ່ວມ. ການປັບປຸງກົງຈັກການຈັດຕັ້ງຂອງອົງການປົກຄອງແຂວງຈຳປາສັກ ມີດັ່ງນີ້:

1. ໂຮມພະແນກແຜນການ ແລະ ການລົງທຶນ ເຂົ້າກັບພະແນກການເງິນ ເອີ້ນຊື່ວ່າ ພະແນກການເງິນ.

2. ໂຮມພະແນກພະລັງງານແລະບໍ່ແຮ່ເຂົ້າກັບພະແນກອຸດສາຫະກຳ ແລະການຄ້າ ເອີ້ນຊື່ວ່າພະແນກອຸດສາຫະກຳແລະການຄ້າ.

3. ໂຮມພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ເຂົ້າກັບພະແນກກະສິກຳ ແລະ ປ່າໄມ້ ເອີ້ນຊື່ວ່າ ພະແນກກະສິກຳແລະສິ່ງແວດລ້ອມ.

4. ໂຮມພະແນກພາຍໃນ ເຂົ້າກັບຄະນະຈັດຕັ້ງແຂວງ ເອົາວຽກງານຄຸ້ມຄອງພະນັກງານ-ລັດຖະກອນ, ວຽກງານພັດທະນາກົງຈັກການຈັດຕັ້ງ, ວຽກງານປົກຄອງທ້ອງຖິ່ນ,ວຽກງານແຂ່ງຂັນ-ຍ້ອງຍໍ, ວຽກງານຄຸ້ມຄອງພະລາກອນແລະວຽກງານອື່ນໆທີ່ສອດຄ່ອງກັບພາລະບົດບາດຂອງຄະນະຈັດຕັ້ງແຂວງ ທັງຍົກຍ້າຍບຸກຄະລາກອນທີ່ຮັບຜິດຊອບວຽກງານດັ່ງກ່າວ ເຂົ້າກັບຄະນະຈັດຕັ້ງແຂວງ; ຍົກຍ້າຍວຽກງານແຜນທີ່, ວຽກງານສາສະໜາ, ວຽກງານເອກະສານ ພ້ອມດ້ວຍບຸກຄະລາກອນທີ່ຮັບຜິດຊອບວຽກງານດັ່ງກ່າວ ເຂົ້າກັບຫ້ອງວ່າການແຂວງ;ຍົກຍ້າຍວຽກງານຄຸ້ມຄອງພົນລະເມືອງ ພ້ອມດ້ວຍບຸກຄະລາກອນທີ່ຮັບຜິດຊອບວຽກງານດັ່ງກ່າວ ເຂົ້າກັບກອງບັນຊາການປ້ອງກັນຄວາມສະຫງົບ; ຍົກຍ້າຍວຽກງານຫັນຫົວໜ່ວຍວິຊາການເປັນເຈົ້າຕົນເອງ ພ້ອມດ້ວຍບຸກຄະລາກອນທີ່ຮັບຜິດຊອບວຽກງານດັ່ງກ່າວ ໄປຂຶ້ນກັບພະແນກການເງິນ.

5. ໂອນວຽກງານສື່ມວນຊົນ (ຖະແຫຼງຂ່າວ) ກອງວິຊາການວິທະຍຸ-ໂທລະພາບ, ກອງວິຊາການສື່ສິ່ງພິມ, ຂະແໜງຖະແຫຼງຂ່າວ ທັງຍົກຍ້າຍບຸກຄະລາກອນທີ່ຮັບຜິດຊອບວຽກງານດັ່ງກ່າວ ໄປຂຶ້ນກັບຄະນະໂຄສະນາອົບຮົມແຂວງ; ປ່ຽນຊື່ພະແນກຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ເປັນພະແນກວັດທະນະທຳ ແລະ ການທ່ອງທ່ຽວ.

ມອບໃຫ້ອົງການປົກຄອງແຂວງ ສົມທົບກັບຄະນະຮັບຜິດຊອບປັບປຸງກົງຈັກການຈັດຕັ້ງຂັ້ນແຂວງ ແລະພາກສ່ວນກ່ຽວຂ້ອງ ນຳພາການປັບປຸງກົງຈັກການຈັດຕັ້ງ ໃຫ້ສຳເລັດພາຍໃນເດືອນກໍລະກົດນີ້; ໃນການປັບປຸງດັ່ງກ່າວແມ່ນໃຫ້ສຸມໃສ່ຄົ້ນຄວ້າ, ເລືອກເຟັ້ນ, ສັບຊ້ອນ, ຈັດວາງພະນັກງານ-ລັດຖະກອນຄືນໃໝ່ ຢ່າງຮັດກຸມ ແລະ ເປັນລະບົບ ພ້ອມທັງເອົາໃຈໃສ່ນຳພາການສຶກສາອົບຮົມການເມືອງ-ແນວຄິດຂອງພະນັກງານ-ລັດຖະກອນ ໃຫ້ມີຄວາມຮັບຮູ້, ເຂົ້າໃຈ ແລະ ເປັນເອກະພາບ ພ້ອມກັນຈັດຕັ້ງປະຕິບັດໃຫ້ໄດ້ຮັບຜົນສຳເລັດເປັນຢ່າງດີຕາມແຜນການທີ່ວາງໄວ້.

**(ສົມວິຈິດ ໄຊມີນຕີ)**

# ກຳແໜ້ນການຈັດຕັ້ງປະຕິບັດ ເພາະເປັນທັງສາດ ແລະ ສິນ




# ທິດດີ

ກອງປະຊຸມສະໄໝສາມັນເທື່ອທີ 9 ຂອງສະພາແຫ່ງຊາດ ຊຸດທີ IX ເຊິ່ງໄດ້ດຳເນີນເປັນເວລາ 14 ວັນ (ວັນທີ 09-26 ມິຖຸນາ 2025) ໄດ້ພິຈາລະນາຮັບຮອງເອົາບັນຫາສຳຄັນພື້ນຖານຂອງປະເທດຊາດ ອອກເປັນມະຕິ 15 ສະບັບ; ໃນນັ້ນ, ມີກົດໝາຍປັບປຸງ ແລະ ສ້າງໃໝ່ ຈຳນວນ 10 ສະບັບ. ສະນັ້ນ, ການໂຄສະນາເຜີຍແຜ່ ແລະ ຈັດຕັ້ງເຊື່ອມຊຶມບັນດາມະຕິດັ່ງກ່າວ ຖືເປັນວຽກງານສຳຄັນຫຼາຍ ເພາະວ່າມີການເຊື່ອມຊຶມເຂົ້າໃຈ ຈຶ່ງສາມາດຈັດຕັ້ງປະຕິບັດໃຫ້ປາກົດຜົນເປັນຈິງ, ເມື່ອເວົ້າເຖິງການຈັດຕັ້ງປະຕິບັດນີ້ ມັນເປັນທັງສາດ ແລະ ສິນ ເນີ!

ປະທານ ໄກສອນ ພົມວິຫານ ຜູ້ນຳທີ່ເຄົາລົບຮັກ ເຄີຍກ່າວໄວ້ວ່າ: ...ບັນຫາການຈັດຕັ້ງປະຕິບັດ ທັງເປັນວິທະຍາສາດ ທັງເປັນສິລະປະ ມັນເປັນວິທະຍາສາດ ກໍຍ້ອນວ່າຢາກຈັດຕັ້ງປະຕິບັດໄດ້ດີແມ່ນຕ້ອງເຊື່ອມຊຶມແນວທາງ ແລະ ທັດສະນະຂອງພັກ ຕ້ອງກຳສະພາບຕົວຈິງໃຫ້ຊັດເຈນ ຮູ້ໄຈ້ແຍກສະພາບການຕົວຈິງຢ່າງສັດຈະວິພາກ ຈາກນັ້ນ, ຈຶ່ງຈະສາມາດວາງແຜນນະໂຍບາຍ ໂຄງການເຄື່ອນໄຫວ ແລະ ເລືອກເອົາໂຄງການທີ່ດີເລີດໄດ້; ໝາຍຄວາມວ່າ ໂຄງການທີ່ສິ້ນເປືອງແຮງງານໜ້ອຍສຸດ ແຕ່ຫາກບັນລຸປະສິດທິຜົນສູງສຸດ, ບົນພື້ນຖານດັ່ງກ່າວນັ້ນ ຈຶ່ງຈັດວາງສັບຊ້ອນກຳລັງເຂົ້າສູ່ການກະທຳຕົວຈິງ.

ບັນຫາຈັດຕັ້ງປະຕິບັດ ເປັນສິລະປະ ກໍຍ້ອນວ່າ ໃນເມື່ອໄດ້ວາງແຜນນະໂຍບາຍໂຄງການ ແລະ ຈັດວາງກຳລັງແລ້ວ ຕ້ອງຮູ້ຈັກກຳເອົາກາລະໂອກາດທີ່ອຳນວຍ ເພື່ອເຄື່ອນໄຫວໃຫ້ຖືກກັບກາລະໂອກາດນັ້ນ ຕ້ອງຮູ້ນຳໃຊ້ ຮູ້ສົມທົບທຸກກຳລັງ ແລະ ການເຄື່ອນໄຫວທຸກດ້ານຢ່າງເຂົ້າແກ່ບເຂົ້າເກຍ ແລະ ເປັນຈັງຫວະດຽວກັນ ຮູ້ວາງນະໂຍບາຍໄມ້ງັດອອກ ໂດຍກຳແໜ້ນບັນດາການພົວພັນທາງຜົນປະໂຫຍດ ເພື່ອປຸກລະດົມມະຫາຊົນຊຸກຍູ້ຂະບວນການ ໃນແຜນການເຄື່ອນໄຫວນັ້ນ ຕ້ອງມີການກຳນົດອັນໃດເປັນຈຸດໜັກ ອັນໃດເປັນຈຸດທົ່ວໄປ ແລະ ຕ້ອງຮູ້ຊອກຮູ້ສ້າງແບບຢ່າງ ແລະ ແຜ່ຂະຫຍາຍແບບຢ່າງນັ້ນອອກຢ່າງກວ້າງຂວາງ (ໄກສອນ ພົມວິຫານ ນິພົນເລືອກເຟັ້ນເຫຼັ້ມ 3 ໜ້າທີ 120-121).

ພວກເຮົາຈະເຫັນວ່າ: ທຸກມະຕິ ຄຳສັ່ງ ຂໍ້ຕົກລົງ ແຈ້ງການຕ່າງໆຂອງພັກ ລວມເຖິງກົດໝາຍ ແລະ ນິຕິກຳລຸ່ມກົດໝາຍຂອງລັດ ລ້ວນແລ້ວແຕ່ມີມາດຕະການຈັດຕັ້ງປະຕິບັດ, ຜ່ານການຈັດຕັ້ງປະຕິບັດ ຈຶ່ງສາມາດຖອດຖອນບົດຮຽນເພື່ອເພີ່ມຕື່ມ ແລະ ບູລະນະຢ່າງບໍ່ຢຸດຢັ້ງ ພ້ອມທັງຢຶດໝັ້ນໃນການຈັດຕັ້ງປະຕິບັດໃຫ້ປາກົດຜົນເປັນຈິງ; ສະຫຼຸບວ່າ: ການຈັດຕັ້ງປະຕິບັດ ເປັນທັງສາດ ແລະ ສິນ... ເນີ.

# ສພຂ ອັດຕະປື ຕິດຕາມ, ຊຸກຍູ້ການກະກຽມ ຫ້ອງເຮັດວຽກ ແລະ ບຸກຄະລາກອນ ຢູ່ 5 ເມືອງ



(ສພຂ)-ວັນທີ 25-26 ມິຖຸນາຜ່ານມາ, ສະພາປະຊາຊົນແຂວງ (ສພຂ) ອັດຕະປື ໄດ້ເຄື່ອນໄຫວຕິດຕາມ, ຊຸກຍູ້ການກະກຽມຫ້ອງເຮັດວຽກ ແລະ ບຸກຄະລາກອນ ໃນການເປັນເສນາທິການໃຫ້ແກ່ຄະນະສະມາຊິກສະພາປະ ຊາຊົນແຂວງ (ຄສຂ) ປະຈຳເຂດເລືອກຕັ້ງເມືອງ ເຊິ່ງແບ່ງອອກເປັນ 2 ຄະນະຄື: ຄະນະທີ 1 ນຳໂດຍທ່ານ ແຫວນຄຳ ປະທຸມມະແສງ ປະທານຄະນະກຳມະການວັດທະນະທຳ-ສັງຄົມແລະບັນດາເຜົ່າເຄື່ອນໄຫວຢູ່ເມືອງສະໜາມໄຊແລະເມືອງພູວົງ; ຄະນະທີ 2 ນຳໂດຍທ່ານ ນາງ ຈັນທະລີ ສີສຸວົງ ປະທານຄະນະກຳມະການຍຸຕິທຳ ແລະ ປ້ອງກັນ ຊາດ-ປ້ອງກັນຄວາມສະຫງົບ ເຄື່ອນໄຫວຢູ່ເມືອງສາມັກຄີໄຊ, ເມືອງຊານໄຊ ແລະ ເມືອງໄຊເສດຖາ ໂດຍໄດ້ເຮັດວຽກກັບຄະນະນຳ, ຄສຂ ປະຈຳເຂດເລືອກຕັ້ງເມືອງ, ຄະນະຈັດຕັ້ງ, ກວດກາພັກ-ລັດ, ຫ້ອງການພາຍໃນແລະຫ້ອງວ່າການເມືອງ.

ໃນການເຮັດວຽກ, ໄດ້ຮັບຟັງລາຍງານການຈັດຕັ້ງປະຕິບັດວຽກງານຂອງຄະນະສະມາຊິກສະພາປະຊາຊົນແຂວງປະຈຳເຂດເລືອກຕັ້ງເມືອງໃນໄລຍະຜ່ານ ແລະ ການກະກຽມຄວາມພ້ອມບ່ອນເຮັດວຽກ ແລະ ບຸກຄະລາກອນ ທີ່ຈະເປັນເສນາທິການໃຫ້ແກ່ ຄສຂ ຊຸດທີ III ປະຈຳເຂດເລືອກຕັ້ງເມືອງ; ຈາກນັ້ນ, ໄດ້ສົນທະນາແລກປ່ຽນຄຳຄິດຄຳເຫັນຮ່ວມກັນ ເພື່ອສ້າງຄວາມເປັນເອກະພາບເຮັດໃຫ້ວຽກງານດັ່ງກ່າວສາມາດຈັດຕັ້ງປະຕິບັດຢ່າງມີຜົນສຳເລັດ ແລະ ມີຄຸນນະພາບ ເຊິ່ງເຫັນໄດ້ວ່າບັນດາເມືອງມີແຜນການກະກຽມປັບປຸງບ່ອນເຮັດວຽກ ແລະ ຄົ້ນຄວ້າຄັດເລືອກບຸກຄະລະກອນຢ່າງລະອຽດ ເພື່ອຮັບປະກັນໃຫ້ແກ່ການຈັດຕັ້ງປະຕິບັດວຽກງານຂອງ ສພຂ ອັດຕະປື ຊຸດທີ III ກໍຄືວຽກງານຂອງ ຄສຂ ປະຈຳເຂດເລືອກຕັ້ງເມືອງພາຍຫຼັງສຳເລັດການເລືອກຕັ້ງສະມາຊິກສະພາປະຊາຊົນແຂວງຊຸດໃໝ່ ໃນຕົ້ນປີ 2026 ທີ່ຈະມາເຖິງ.

ຄະນະຈາກສະພາປະຊາຊົນແຂວງ ໄດ້ສະແດງຄວາມຊົມເຊີຍໃນການສະໜອງຂໍ້ມູນໂດຍພື້ນຖານຄັ້ງນີ້ ເຊິ່ງຈະນຳເອົາຂໍ້ມູນດັ່ງກ່າວ ລາຍງານຕໍ່ຄະນະປະຈຳສະພາປະຊາຊົນແຂວງ ແລະ ສະພາແຫ່ງຊາດ.

**(ວິນັດ ສີສຸລາດ)**

# ທາບທາມຮ່າງນິຕິກຳໃຕ້ກົດໝາຍ 3 ສະບັບ



(ສພຂ) - ວັນທີ 23 ແລະ 25 ມິຖຸນາຜ່ານມາທີ່ເມືອງທ່າແຕງ ແລະ ເມືອງດາກຈຶງ ຕາມລຳດັບ ໄດ້ມີກອງປະຊຸມທາບທາມຮ່າງນິຕິກຳໃຕ້ກົດໝາຍ 3 ສະບັບ ໂດຍການເປັນປະທານຂອງທ່ານ ນາງ ຄຳເສັງ ທຸມມະວົງສາ ກຳມະ ການພັກແຂວງ, ຮອງປະທານສະພາປະຊາຊົນແຂວງ (ສພຂ) ແຂວງເຊກອງ; ເຂົ້າຮ່ວມມີທ່ານ ແສງລາຕີ ຫຼວງມຍະເດດ ເລຂາພັກເມືອງ, ເຈົ້າເມືອງທ່າແຕງ, ບັນດາທ່ານໃນຄະນະກຳມະການຍຸຕິທຳ ແລະ ປກຊ-ປກສ, ພະແນກກະສິກຳ ແລະ ປ່າໄມ້ແຂວງ, ສະມາຊິກສະພາປະຊາຊົນແຂວງ (ສສຂ) ປະຈຳເຂດເລືອກຕັ້ງເມືອງ ພ້ອມດ້ວຍບັນດາຫ້ອງການ, ອົງການ ແລະ ຂະແໜງການທີ່ກ່ຽວຂ້ອງຂອງ 2 ເມືອງ.

ຜູ້ເຂົ້າຮ່ວມໄດ້ຮັບຟັງຮ່າງຂໍ້ຕົກລົງວ່າດ້ວຍການຄຸ້ມຄອງ-ນຳໃຊ້ຊົນລະປະທານ, ຮ່າງຂໍ້ຕົກລົງວ່າດ້ວຍການຄຸ້ມຄອງການນຳໃຊ້ສູນປິ່ນປົວ ແລະຟື້ນຟູຜູ້ຕິດຢາເສບຕິດ, ຮ່າງຂໍ້ຕົກລົງວ່າດ້ວຍການສ້າງກົມກອງ ແລະພະແນກການປອດຢາເສບຕິດ; ຈາກນັ້ນ, ໄດ້ພ້ອມກັນສຸມໃສ່ຄົ້ນຄວ້າ, ປະກອບຄຳເຫັນເພື່ອປັບປຸງໃຫ້ເນື້ອໃນມີຄວາມສົມບູນ ແລະ ເປັນຂໍ້ມູນໃຫ້ແກ່ ສສຂ ພິຈາລະນາຮັບຮອງເອົາໃນກອງປະຊຸມສະໄໝສາມັນເທື່ອທີ 9 ຂອງ ສພຂ ຊຸດທີ II.



## ສຸກສະບາຍຫາຍໂຣຄ

# ຜັກຕຸມແຕງແຄມຮົ້ວ

# ຮຽບຮຽງໂດຍ: ທິວກະທິ



ຜັກຕຸມແຕງເປັນຜັກທີ່ມີລົດຂົມເລັກນ້ອຍເປັນຢາເຢັນ ແລະ ມີສານເບື່ອເລັກນ້ອຍ ເຊິ່ງມີຜົນຕໍ່ປອດ ແລະຕັບ; ແຕ່ສາມາດໃຊ້ເປັນຢາແກ້ຫວັດ ແລະ ໄຂ້ຮ້ອນ ໂດຍໃຊ້ຕົ້ນສົດໆ 35 ກຼາມ, ຕົ້ມກັບນ້ຳ ແລະ ເພີ່ມນ້ຳຕານແດງເລັກນ້ອຍ; ໃຊ້ເປັນຢາຮັກສາໂຣກມະເຮັງເຕົ້ານົມ ມະເຮັງປາກມົດລູກ; ຊ່ວຍຮັກສາໂຣກຕ່ອມທອນຊິນແກ້ໄອຮ້ອນໃນປອດ ແລະຊ່ວຍແກ້ອາການຕ່ອມເຕົ້ານົມອັກເສບກະທັນຫັນ ໂດຍໃຊ້ຜັກຕຸມແຕງ 70 ກຣາມ ມາຕົ້ມກັບນ້ຳແລ້ວຮັບປະທານ 2 ຄັ້ງຕໍ່ມື້ຕິດຕໍ່ກັນປະມານ 3-7 ມື້ ຈະເຫັນວ່າການອັກເສບນ້ອຍລົງ ແລະ ອາການຄ່ອຍໆດີຂຶ້ນ.

- ນຳເອົາຮາກແລະໝາກໄປຕົ້ມກັບນ້ຳ ເພື່ອກິນເປັນຢາບຳລຸງຮ່າງກາຍ ແລະ ຮັກສາອາການອ່ອນເພຍ

- ໝາກສຸກໃຊ້ໃນການຮັກສາໂລກເບົາຫວານ, ຫຼຸດລະດັບນ້ຳຕານໃນເລືອດ ໂດຍໃຊ້ໄມ້ແຫ້ງ, ບົດໃຫ້ລະອຽດ 1-2 ບ່ວງກາເຟປະສົມກັບນ້ຳຮ້ອນ 1 ຈອກ ແລ້ວດື່ມຕອນເຊົ້າ-ແລງ, ຊ່ວຍເພີ່ມຄວາມຢາກອາຫານ, ເປັນຢາແກ້ໄຂ້, ຊ່ວຍຮັກສາອາການຖອກທ້ອງ, ຂີ້ກາກ, ຊ່ວຍຫຼຸດຜ່ອນການຫົດຍືນຂອງກ້າມຊີ້ນທີ່ໜັກເກີນໄປ;

- ນຳເອົາຕົ້ນຜັກຕຸມແຕງທັງໝົດມາຕົ້ມແລ້ວດື່ມເພື່ອຂັບຂີ້ກະເທີ, ຊ່ວຍບັນເທົາອາການຫອບຫືດ, ໄອ; ຊ່ວຍບັນເທົາອາການເຈັບສຽບ, ຮັກສາການຕິດເຊື້ອທາງເດີນປັດສະວະ, ຊ່ວຍບັນເທົາອາການຕົກຂາວໃນຊ່ອງຄອດຂອງແມ່ຍິງ, ຊ່ວຍຮັກສາໂລກຂີ້ທິດ, ແກພິດ-ບວມ;

- ໃບຂອງຜັກຕຸມແຕງຊ່ວຍຮັກສາບາດແຜ ແລະ ໄຂຂໍ່ອັກເສບ.

- ໝາກສຸກຜົນໃຊ້ທາບໍລິເວນທີ່ມີທາກດູດ ໂດຍຄັ້ນເອົານ້ຳມາທາ ຫຼື ພອກບໍລິເວນທີ່ຖືກກັດ ຈະເຮັດໃຫ້ແຜແຫ້ງໄວ;

- ນຳມາຕົ້ມອາບ ເພື່ອບັນເທົາອາການແພ້ຊ້ຳເຮື້ອ, ຝີໜອງ ແລະ ພິດງູ;

ເຖິງວ່າຜັກຕຸມແຕງຈະມີຄຸນປະໂຫຍດຫຼາຍແຕ່ໃນໝາກດິບຂອງຜັກຕຸມແຕງຍັງມີສານພິດ Slanine ທີ່ເປັນອັນຕະລາຍຕໍ່ລະບົບລຳໄສ້ ຫາກກິນຫຼາຍເກີນໄປຈະເຮັດໃຫ້ມີຕຸ່ມຮ້ອນໃນຢູ່ປາກ ແລະ ຄໍ; ຈາກນັ້ນ, ຈະມີອາການປວດຮາກ, ຮາກ, ເບື່ອອາຫານ, ເຈັບທ້ອງ ແລະ ຖອກທ້ອງ, ອຸນຫະພູມໃນຮ່າງກາຍສູງຂຶ້ນ ຮ່ວມກັບເຫື່ອອອກ, ເຈັບຫົວ, ເຫື່ອອອກຫຼາຍກວ່າປົກກະຕິ, ຫາຍໃຈຍາກ ແລະ ປວດເມື່ອຍກ້າມເນື້ອ ອາການເປັນພິດຂັ້ນສຸດທ້າຍແມ່ນຖ່າຍເປັນເລືອດ ຍ້ອນລຳໄສ້ມີບາດແຜ, ປັດສະວະເປັນເລືອດຍ້ອນໝາກໄຂ່ຫຼັງເຮັດວຽກຜິດປົກກະຕິ, ຊັກ, ສະຫຼົບ ແລະອຸນຫະພູມຮ່າງກາຍຕ່ຳລົງ ຫາກມີອາການທີ່ກ່າວມາຂ້າງເທິງນັ້ນໃຫ້ຮີບໄປພົບແພດໂດຍດ່ວນ.

## ອາດ ກະວີລາວ

# ດັ່ງດວງຈຳປາ

(ມອບແດ່ວັນສ້າງຕັ້ງສະຫະພັນແມ່ຍິງລາວ)

# ແກ້ວຕາວັນ ທຳມະວົງ

❋ ຈຳປາຢືນຢູ່ຍັ້ງ ມາແຕ່ບູຮານ
ຜ່ານຫ່າຝົນໂຮຍຮຳ ແດດເຜົາຜານໄໝ້
ຈຳປາຍັງທົນໄດ້ ໃບຂຽວງອຍງ່າ
ຕະການຕາເອກອ້າງ ກາງອ້າອາບສຸລີ

❋ ສະຕຣີລາວປຸນປຽບດ້ວຍ ດວງດອກຈຳປາ
ການເວລາລາໄລ ຜ່ານໄປຫຼາຍມື້
ຍັງຊື່ຕົງຍືນໝັ້ນ ທົນທານໄຫວຫວັ່ນ
ໃຈບໍ່ຜັນປ່ຽນປີ້ນ ຫັນໜ້າໜ່າຍໜີ

❋ ຫຼາຍພັນປີທີ່ເຈົ້າ ຂົ່ມຂືນຢືນທົນ
ຖືກຜູ້ຄົນເຂົາຖື ດັ່ງດຽວຂອງຫຼິ້ນ
ສິ້ນຄ່າຄຸນຄວນໄດ້ ຄືຊາຍທຽບເທົ່າ
ເຈົ້າກໍຍັງຢູ່ໄດ້ ໃຈສູ້ບໍ່ຖອຍ

❋ ບັດນີ້ສະຕີລາວທົ່ວໜ້າ ມີສິດເທົ່າທຽມຊາຍ
ຢູ່ໃນຫຼາຍອົງກອນ ບ່ອນໃດມີໜ້າ
ໜັກໜາຍິງລາວສູ້ ຮຽງຊາຍຄຽງຄູ່
ບໍ່ໄດ້ແນມສ່ອງລ້າ ນອນເອົາຂາກ່າຍຫ້າງ ຫຼືເສີຍນັ່ງເບິ່ງດາຍ

❋ 20 ກໍລະກົດຍ່າງຍ້າຍ ຫຍັບມໍ່ວຽນມາ
ຂໍພອນໄຊທົ່ວເຖິງ ແມ່ຍິງລາວທົ່ວໜ້າ
ຢ່າໄດ້ໝອງໝາງເສົ້າ ຜິວພັນເຫຼືອງລ່າ
ໃຫ້ຍືນຍາວຢູ່ຍັ້ງ ດັ່ງຈຳປາໄຂກີບອ້າ ຕະການເອ້ຊາດລາວ ນັ້ນທ້ອນ!



## ຟ້າຫາຍ ລະບາຍ

(ເລື່ອງເບົາໆ ເອົ້າແບບກັນເອງ ບໍ່ເຄັ່ງພິທີການ)

# ສຽມທ້ຽນ

❋ **ຊົມ**ເຊີຍວັນສ້າງຕັ້ງສະຫະພັນແມ່ຍິງລາວ ທີ່ໝູນວຽນມາບັນຈົບ ຄົບຮອບ **70 ປີ** ບັດນີ້ຍິງລາວກ້າວທຽບເທົ່າທັນຊາຍ ການງານມອບໝາຍ ດັ່ງດຽວສະເໝີດ້ານ ທັງວັດທະນະທຳພ້ອມ ຍິງ-ຊາຍຄຽງຄູ່ ທັງຊູຊ່ອຍຊອ້ານ ຄອບຄົວໝັ້ນສະເໝີກັບ **ບັ້ນແລ້ວ!**

❋ **ຊ່າວ**ດີວັນທີ 13 ກໍລະກົດນີ້ ພື້ນທີ່ອຸດທິຍານແຫ່ງຊາດ ຫີນໜາມໜໍ່ ໄດ້ເຂົ້າເປັນມໍລະດົກໂລກ ແຫ່ງທີ 4 ຂອງ ສປປລາວ ມີທຳມະຊາດອອດອ້າງ ແບບຢ່າງການຮັກສາ ມາດຕະຖານບໍລິມະສິດ ຄ່າຄວນສະຫງວນໄວ້ ໃຫ້ຊາວໂລກາຮູ້ ເມືອງລາວມີຫຼາຍຢ່າງ ເປັນຂອງດີເອກອ້າງ ປະຊາເຊື້ອຊື່ນໃຈ **ຄັກເດ!**

## ຊອບຍິ້ມ

# ພົ້ງຄຶງ

### ເລື່ອງ: ມາຊ້າ

ສົມສີ ມາໂຮງຮຽນຊ້າ, ຈຶ່ງຖືກສາວຄູຊັກຖາມ

**ຄູ:** ສົມສີ, ເປັນຫຍັງມື້ນີ້ ຫຼານຄືມາໂຮງຮຽນສວາຍແທ້?

**ສົມສີ:** ພໍ່ກັບແມ່ຂອງຫຼານຄຽງກັນ

**ຄູ:** ອ້າວ... ພໍ່ກັບແມ່ຄຽງກັນ ຄືເຮັດໃຫ້ຫຼານມາໂຮງຮຽນຊ້າ

**ສົມສີ:** ເພາະວ່າເກີບຫຼານຂ້າງໜຶ່ງຢູ່ກັບພໍ່, ອີກຂ້າງໜຶ່ງຢູ່ກັບແມ່

**ຄູ:** !!!...



## ສຸພາສິດ-ຄະຕິເຕືອນໃຈ

# ດອກຫຍ້າ

ຢ່າໄດ້ລົ່ມໄພ່ບ້ອຍ ຝູງໝູ່ຄົບທຸກ
ຄັນວ່າບຸນຍັງມີ ຫາກຊິເຮືອງເມືອໜ້າ

## ລັດຖະສະພາຕ່າງປະເທດ

# ຮ່າງກົດໝາຍຊ່ວຍເຫຼືອເສຍຊີວິດ ຜ່ານສະພາຕ່ຳ, ເຂົ້າສູ່ສະພາສູງ

(Xinhua) - ສະພາຕ່ຳຂອງສະຫະລາຊະອານາຈັກ ໄດ້ອະນຸມັດຮ່າງກົດໝາຍຊ່ວຍເຫຼືອເສຍຊີວິດ ໃນການລົງຄະແນນສຽງຄັ້ງທີ 3 ເມື່ອວັນສຸກທີ 20 ມິຖຸນາຜ່ານມາ, ເຊິ່ງເປັນບາດກ້າວສຳຄັນໃນການເຮັດໃຫ້ການຊ່ວຍເຫຼືອເສຍຊີວິດ ສຳລັບຜູ້ໃຫຍ່ທີ່ເຈັບປ່ວຍໄລຍະສຸດທ້າຍ ເປັນເລື່ອງຖືກກົດໝາຍໃນອັງກິດແລະເວວ (Wales).

ສະມາຊິກສະພາຕ່ຳ ລົງຄະແນນສຽງເຫັນດີ 314 ຕໍ່ 291 ສຽງ ຮັບຮອງເອົາຮ່າງກົດໝາຍຜູ້ໃຫຍ່ທີ່ເຈັບປ່ວຍໄລຍະສຸດທ້າຍ (ຈົບຊີວິດ) [Terminally Ill Adults (End of Life)]; ຮ່າງກົດໝາຍເຊິ່ງສະເໜີໂດຍ ຄິມ ລີດບີເຕີ (Kim Leadbeater) ສະມາຊິກສະພາຕ່ຳຈາກພັກແຮງງານ, ສະເໜີໃຫ້ຜູ້ໃຫຍ່ທີ່ມີສຸຂະພາບຈິດດີ ທີ່ກວດພົບວ່າເຈັບປ່ວຍໄລຍະສຸດທ້າຍ ແລະ ຄາດວ່າຈະເສຍຊີວິດພາຍໃນ 6 ເດືອນ ສາມາດເລືອກຈົບຊີວິດຂອງຕົນຢ່າງຖືກຕ້ອງຕາມກົດໝາຍ.

ມີການລວມມາດຕະການປ້ອງກັນ ເພື່ອໃຫ້ແນ່ໃຈວ່າ ການຕັດສິນໃຈນັ້ນໄດ້ຮັບຂໍ້ມູນຄົບຖ້ວນ, ສະໝັກໃຈ ແລະ ບໍ່ມີການບັງຄັບ.

ຕັ້ງແຕ່ມີການສະເໜີ, ຮ່າງກົດໝາຍດັ່ງກ່າວ ໄດ້ຜ່ານການກວດກາ ແລະ ປັບປຸງແກ້ໄຂຢ່າງລະອຽດຖີ່ຖ້ວນ.

ຂະນະນີ້, ກົດໝາຍກຳລັງສົ່ງຕໍ່ໄປຍັງສະພາຂຸນນາງເຊິ່ງເປັນສະພາສູງທີ່ບໍ່ໄດ້ມາຈາກການເລືອກຕັ້ງ, ເພື່ອດຳເນີນການອະພິປາຍ ແລະ ກວດກາຄືນຕື່ມອີກ.

ຫາກກົດໝາຍສະບັບນີ້ຜ່ານ, ຈະຖືເປັນການປ່ຽນແປງຄັ້ງໃຫຍ່ທີ່ສຸດຄັ້ງໜຶ່ງໃນນະໂຍບາຍສັງຄົມຂອງສະຫະລາຊະອານາຈັກ ນັບຕັ້ງແຕ່ການອອກກົດໝາຍອະນຸຍາດໃຫ້ເອົາລູກອອກ (ແທ້ງລູກ) ໃນປີ 1967.




# Mexico ອະນຸມັດກົດໝາຍຫ້າມການສະແດງກ່ຽວຂ້ອງກັບ "ປາໂລມາ"




(Mexico News Daily) - ລັດຖະສະພາຂອງເມັກຊິກ ໄດ້ອະນຸມັດຫ້າມການສະແດງກ່ຽວຂ້ອງກັບປາໂລມາ ແລະ ສັດລ້ຽງລູກດ້ວຍນົມໃນທະເລຊະນິດອື່ນດ້ວຍ; ການປະຕິຮູບດັ່ງກ່າວ ໄດ້ຮັບການອະນຸມັດຢ່າງເປັນເອກະສັນຈາກສະພາສູງ ເມື່ອວັນຈັນທີ 23 ມິຖຸນາຜ່ານມາ ພາຍຫຼັງສະພາຜູ້ແທນປະຊາຊົນ ຫຼື ສະພາຕ່ຳ ໄດ້ອະນຸມັດກ່ອນໜ້ານີ້ແລ້ວ, ເຫຼືອພຽງໃຫ້ປະທານາທິບໍດີລົງນາມເພື່ອບັງຄັບໃຊ້ກົດໝາຍຢ່າງເປັນທາງການ.

ສະຖານທີ່ສະແດງປາໂລມາໃນເມັກຊິກ ເຊິ່ງມີປາໂລມາຖືກກັກຂັງຫຼາຍກວ່າ 8% ຂອງໂລກ ຈະຖືກຍົກເລີກ; ນອກຈາກນີ້, ສັດລ້ຽງລູກດ້ວຍນົມໃນທະເລ ຈະໄດ້ຮັບອະນຸຍາດໃຫ້ຈັບໄດ້ສະເພາະໃນທຳມະຊາດ ຫຼື ຈັບມາປະສົມພັນໃນສະຖານທີ່ກັກຂັງເພື່ອຈຸດປະສົງການອະນຸລັກເທົ່ານັ້ນ.

# Romania ເລືອກຕັ້ງຜູ້ນຳລັດຖະສະພາຊຸດໃໝ່ ຫຼັງການແຕ່ງຕັ້ງລັດຖະບານ



(Xinhua) - ລັດຖະສະພາຂອງຣູມານີ ໄດ້ເລືອກຕັ້ງຜູ້ນຳຊຸດໃໝ່ ໃນວັນອັງຄານທີ 24 ມິຖຸນາຜ່ານມາ ພາຍຫຼັງມີການຈັດຕັ້ງລັດຖະບານຊຸດໃໝ່.

ມີຣ໌ເຊຍ ອາບູດຽນ (MirceaAbrudean) ຈາກພັກເສລີນິຍົມແຫ່ງຊາດ (National Liberal Party - PNL) ໄດ້ຮັບເລືອກເປັນປະທານສະພາສູງ ດ້ວຍ 89 ສຽງເຫັນດີ ແລະ 28 ສຽງຄັດຄ້ານ ເຊິ່ງໄດ້ຮັບການສະໜັບສະໜູນຈາກພັກຮ່ວມລັດຖະບານ, ໂດຍດຳລົງຕຳແໜ່ງຕໍ່ຈາກ ອີລີ ໂບໂລຈັນ (Ilie Bolojan) ທີ່ລາອອກຫຼັງຈາກເຂົ້າຮັບຕຳແໜ່ງນາຍົກລັດຖະມົນຕີເມື່ອວັນຈັນ; ຜູ້ສະໝັກຊິງຕຳແໜ່ງປະທານສະພາສູງຄົນອື່ນ ໄດ້ແກ່ ມີຣ໌ເຊຍ ເຊລາຣູ (Mircia Chelaru) ຈາກພັກພັນທະມິດເພື່ອສະຫະພາບຣູມານີ ໄດ້ຮັບ 27 ສຽງ ແລະ ດູມິທູ ມາເນຍ (Dumitru Manea) ຈາກພັກ S.O.S. ຣູມານີ ໄດ້ຮັບພຽງສຽງດຽວ.

ໃນການລົງຄະແນນສຽງທາງເອເລັກໂຕຼນິກທີ່ແຍກຕ່າງຫາກ, ລູຊຽນ ຣູຊູ (Lucian Rusu) ຈາກພັກ PNL ໄດ້ຮັບເລືອກເປັນຮອງປະທານສະພາສູງ ດ້ວຍ 81 ສຽງເຫັນດີ (ສະພາສູງມີ 134 ທີ່ນັ່ງ, ອາຍຸການ 4 ປີ).

ໃນສະພາຜູ້ແທນປະຊາຊົນ ຫຼື ສະພາຕ່ຳ, ໂຊຣິນ ກຼິນເດຍນູ (Sorin Grindeanu) ຈາກພັກສັງຄົມປະຊາທິປະໄຕ ໄດ້ຮັບເລືອກເປັນປະທານ ດ້ວຍ 201 ສຽງເຫັນດີ, ຄູ່ແຂ່ງຂອງເຂົາ ໄອໂອນິລ ໂກອິເດສຄູ (Ionel Goidescu) ຈາກພັກ S.O.S. ຣູມານີ ໄດ້ຮັບພຽງ 20 ສຽງ (ສະພາຕ່ຳມີ 330 ທີ່ນັ່ງ, ອາຍຸການ 4 ປີ).

# ປະທານາທິບໍດີ Nigeria ລົງນາມຮ່າງກົດໝາຍປະຕິຮູບພາສີ



(Xinhua) - ວັນທີ 26 ມິຖຸນາຜ່ານມາ, ໂບລາ ຕີນູບູ (Bola Tinubu) ປະທານາທິບໍດີນິເຊຣີ ໄດ້ລົງນາມໃນຮ່າງກົດໝາຍ 4 ສະບັບ ເພື່ອປະຕິຮູບລະບົບພາສີຂອງປະເທດອາຟຣິກາຕາເວັນຕົກຢ່າງຮອບດ້ານ ເຊິ່ງເປັນຂໍ້ລິເລີ່ມທາງກົດໝາຍທີ່ອອກແບບມາເພື່ອແບ່ງເບົາພາລະທາງເສດຖະກິດຕໍ່ຜູ້ມີລາຍໄດ້ຕ່ຳ ແລະ ທຸລະກິດຂະໜາດນ້ອຍ.

ກົດໝາຍໃໝ່ທີ່ໄດ້ຮັບການສະໜັບສະໜູນຢ່າງກວ້າງຂວາງຈາກພາກສ່ວນກ່ຽວຂ້ອງ ຄາດວ່າຈະປັບປຸງລະບົບພາສີຂອງປະເທດ, ຊຸກຍູ້ການເຕີບໂຕທາງເສດຖະກິດແຫ່ງຊາດ ແລະ ຍົກລະດັບຄຸນນະພາບຊີວິດຂອງຊາວນິເຊຣີຫຼາຍລ້ານຄົນ ໂດຍຜ່ານຂໍ້ກຳນົດທີ່ຮ່າງຂຶ້ນເພື່ອຜົນປະໂຫຍດຂອງຜູ້ດ້ອຍໂອກາດ ແລະ ສົ່ງເສີມຂະແໜງການທີ່ບໍ່ເປັນທາງການ.

ກ່າວຄຳເຫັນທີ່ພິທີລົງນາມຂອງປະທານາທິບໍດີເຊິ່ງມີເຈົ້າໜ້າທີ່ລະດັບສູງຂອງລັດຖະບານ ແລະ ທີ່ປຶກສາດ້ານເສດຖະກິດຄົນສຳຄັນເຂົ້າຮ່ວມໃນນະຄອນຫຼວງອາບູຈາ, ຕີນູບູ ໄດ້ຍົກຍ້ອງກົດໝາຍໃໝ່ວ່າ "ມີຄວາມສຳຄັນຢ່າງຍິ່ງຕໍ່ວິວັດທະນາການຂອງນິເຊຣີ".

ບັນດາຜູ້ຊ່ຽວຊານທ້ອງຖິ່ນກ່າວວ່າ ກົດໝາຍທີ່ໄດ້ຮັບການປະກາດໃຊ້ໃໝ່ນີ້ ໄດ້ມີການແກ້ໄຂຢ່າງຫຼວງຫຼາຍຕໍ່ເກນພາສີລາຍໄດ້ສ່ວນບຸກຄົນ, ເຮັດໃຫ້ຜູ້ມີລາຍໄດ້ຕ່ຳ ໄດ້ຮັບການຍົກເວັ້ນຈາກການເກັບພາສີໂດຍກົງໃນສັດສ່ວນທີ່ສູງຂຶ້ນ; ນອກຈາກນີ້, ຍັງອະນຸມັດການຫຼຸດພາສີ ແລະ ຄ່າທຳນຽມຕ່າງໆຢ່າງຫຼວງຫຼາຍສຳລັບ SMEs ໂດຍເນັ້ນໜັກເປັນພິເສດຕໍ່ຜູ້ປະກອບການໃນຂະແໜງເສດຖະກິດທີ່ສຳຄັນ.

ກົດໝາຍສະບັບໃໝ່ທີ່ຄາດວ່າຈະມີຜົນສັກສິດໃນວັນທີ 1 ມັງກອນ 2026 ໄດ້ສະໜອງສິ່ງຈູງໃຈດ້ານພາສີສະເພາະໃຫ້ບັນດາວິສາຫະກິດທີ່ມຸ່ງໝັ້ນລົງທຶນໃນການສ້າງວຽກເຮັດງານທຳ, ໂຄງການເຝິກອົບຮົມວິຊາຊີບ ແລະ ໂຄງການລິເລີ່ມພັດທະນາຊົນນະບົດ ລວມທັງປັບປຸງຂະບວນການຍື່ນ ແລະ ຊຳລະພາສີ ໃຫ້ມີປະສິດທິພາບສູງຂຶ້ນ ສຳລັບທັງບຸກຄົນ ແລະ ທຸລະກິດຂະໜາດນ້ອຍ.

# ຫວຽດນາມຜ່ອນຄາຍຂໍ້ກຳນົດສຳລັບຄົນຕ່າງປະເທດຂໍສັນຊາດ, ຍົກເລີກໂທດປະຫານຊີວິດ, ຫ້າມການຄ້າຂໍ້ມູນສ່ວນບຸກຄົນ ແລະ ຍົກເວັ້ນຄ່າຮຽນໃຫ້ນັກຮຽນໂຮງຮຽນລັດ


ຫງວຽນ ຫ້າຍ ນິງ

(Xinhua)-ວັນອັງຄານ ທີ 24 ມິຖຸນາຜ່ານມາ, ສະພາແຫ່ງຊາດຫວຽດນາມ ໄດ້ຮັບຮອງເອົາກົດໝາຍວ່າດ້ວຍສັນຊາດ, ແນໃສ່ອຳນວຍຄວາມສະດວກໃຫ້ກັບຊາວຫວຽດນາມຢູ່ຕ່າງປະເທດແລະຊ່ຽວຊານຕ່າງປະເທດ ເພື່ອຍື່ນຂໍ ຫຼື ໄດ້ສັນຊາດຄືນ; ຕາມກົດໝາຍສະບັບປັບປຸງນີ້, ຄົນຕ່າງປະເທດ ແລະ ບຸກຄົນທີ່ບໍ່ມີປະເທດ ຫຼື ສັນຊາດ (stateless individuals) ສາມາດມີສິດໄດ້ຮັບສັນຊາດຫວຽດນາມ ຖ້າພວກເຂົາອາໄສຢູ່ໃນປະເທດຢ່າງໜ້ອຍ 5 ປີ ແລະ ມີຄວາມສາມາດໃນການດູແລຊີວິດການເປັນຢູ່ຂອງຕົນເອງໄດ້.

ຜູ້ສະໝັກຕ້ອງປະຕິບັດຕາມລັດຖະທຳມະນູນແລະກົດໝາຍຂອງຫວຽດນາມ, ເຄົາລົບວັດທະນະທຳ ແລະ ຮີດຄອງປະເພນີຂອງທ້ອງຖິ່ນ, ແລະມີຄວາມສາມາດທາງພາສາຫວຽດນາມຢ່າງພຽງພໍເພື່ອປັບຕົວເຂົ້າກັບສັງຄົມໄດ້.

ກົດໝາຍສະບັບນີ້ອະນຸຍາດໃຫ້ຍົກເວັ້ນຄວາມສາມາດທາງພາສາ, ໄລຍະເວລາການອາໄສຢູ່ ແລະ ເງື່ອນໄຂການກຸ້ມຕົນເອງທາງການເງິນ ສຳລັບຜູ້ທີ່ມີຄູ່ສົມລົດ, ລູກ, ພໍ່ແມ່ ຫຼື ປູ່ຍ່າພໍ່ເຖົ້າແມ່ເຖົ້າ ທີ່ເປັນພົນລະເມືອງຫວຽດນາມ, ຜູ້ທີ່ໄດ້ປະກອບສ່ວນອັນສຳຄັນຕໍ່ປະເທດຊາດ ຫຼື ຜູ້ທີ່ຖືວ່າການປ່ຽນສັນຊາດເປັນປະໂຫຍດຕໍ່ລັດ.

ລັດຖະມົນຕີກະຊວງຍຸຕິທຳ ຫງວຽນ ຫ້າຍ ນິງ (Nguyen Hai Ninh) ກ່າວວ່າ: ກົດໝາຍສະບັບປັບປຸງນີ້ໄດ້ສ້າງເງື່ອນໄຂສະດວກຫຼາຍຂຶ້ນໃຫ້ແກ່ນັກລົງທຶນ, ຊ່ຽວຊານ, ນັກວິທະຍາສາດຕ່າງປະເທດ ໃນການຂໍສັນຊາດ ຫວຽດນາມ ເຊິ່ງຈະຊ່ວຍດຶງດູດຊັບພະຍາກອນມະນຸດທີ່ມີຄຸນນະພາບສູງເຂົ້າມາໃນປະເທດ.

ວັນທີ 25 ມິຖຸນາ, ສະພາແຫ່ງຊາດ ໄດ້ຜ່ານຮ່າງປະມວນກົດໝາຍອາຍາສະບັບປັບປຸງ ໂດຍຍົກເລີກໂທດປະຫານຊີວິດສຳລັບອາຊະຍາກຳ 8 ປະເພດ, ລວມທັງການສໍ້ໂກງຊັບສິນ; ກົດໝາຍສະບັບນີ້ ຍັງອະນຸຍາດໃຫ້ຈຳຄຸກຕະຫຼອດຊີວິດສຳລັບການສໍ້ໂກງຊັບສິນຫຼືຮັບສິນບົນ, ເຊິ່ງສາມາດຫຼຸດໂທດໄດ້ກໍຕໍ່ເມື່ອຜູ້ກະທຳຜິດສົ່ງຄືນຊັບສິນຢ່າງໜ້ອຍສາມສ່ວນສີ່ ແລະ ໃຫ້ການຊ່ວຍເຫຼືອເຈົ້າໜ້າທີ່ຢ່າງຕັ້ງໜ້າ ຫຼື ບໍລິຈາກເງິນຈຳນວນຫຼວງຫຼາຍ.

ໂທດປະຫານຊີວິດຈະຖືກຍົກເລີກໃນການກໍ່ອາຊະຍາກຳອີກ 7 ປະເພດ ໄດ້ແກ່: ອາຊະຍາກຳທີ່ແນໃສ່ໂຄ່ນລົ້ມລັດຖະບານຂອງປະຊາຊົນ, ອາຊະຍາກຳຂອງການທຳລາຍພື້ນຖານໂຄງລ່າງຂອງລັດ ແລະ ສິ່ງອຳນວຍຄວາມສະດວກທາງດ້ານເຕັກນິກ, ອາຊະຍາກຳການຜະລິດ ແລະ ຄ້າຂາຍຢາປອມ ເພື່ອປິ່ນປົວແລະປ້ອງກັນ, ອາຊະຍາກຳທຳລາຍສັນຕິພາບ ແລະ ກໍ່ໃຫ້ເກີດສົງຄາມຮຸກຮານ, ອາຊະຍາກຳຂອງການຈາລະກຳຫຼືສືບຄວາມລັບ (ການສອດແນມ), ການຂົນສົ່ງຢາເສບຕິດຜິດກົດໝາຍ, ແລະ ການຮັບສິນບົນ

ລັດຖະມົນຕີກະຊວງຍຸຕິທຳກ່າວວ່າ: ການຍົກເລີກໂທດປະຫານຊີວິດສຳລັບອາຊະຍາກຳບາງປະເພດ ຈະຊ່ວຍສົ່ງເສີມການຮ່ວມມືສາກົນ, ໂດຍສະເພາະຢ່າງຍິ່ງເມື່ອຫວຽດນາມກຳລັງເພີ່ມທະວີການພົວພັນມິດຕະພາບທີ່ໃກ້ຊິດຍິ່ງຂຶ້ນ ບົນພື້ນຖານຄວາມໄວ້ເນື້ອເຊື່ອໃຈເຊິ່ງກັນແລະກັນ; ພ້ອມທັງສະແດງໃຫ້ເຫັນເຖິງຄວາມຮັບຜິດຊອບແລະຄວາມສາມາດຂອງການຄຸ້ມຄອງລັດ ແລະ ອົງການຕຸລາການ ໃນສະພາບການປັດຈຸບັນ.

ກົດໝາຍສະບັບປັບປຸງນີ້ ມີຜົນບັງຄັບໃຊ້ຕັ້ງແຕ່ວັນທີ 1 ກໍລະກົດ 2025.

ວັນທີ 26 ມິຖຸນາ, ສະພາແຫ່ງຊາດ ໄດ້ຮັບຮອງເອົາກົດໝາຍປົກປ້ອງຂໍ້ມູນສ່ວນບຸກຄົນ, ເຊິ່ງຫ້າມການເຄື່ອນໄຫວຕ່າງໆ ເຊັ່ນ: ການຊື້ ຫຼື ຂາຍຂໍ້ມູນສ່ວນບຸກຄົນ; ຜູ້ລະເມີດສາມາດຖືກປັບໃໝສູງສຸດ 10 ເທົ່າຂອງລາຍໄດ້ຈາກການຊື້ຂາຍຂໍ້ມູນສ່ວນບຸກຄົນ, ໃນຂະນະທີ່ການລະເມີດກົດລະບຽບການໂອນຂໍ້ມູນຂ້າມຊາຍແດນ ອາດສົ່ງຜົນໃຫ້ມີໂທດຖືກປັບໃໝສູງສຸດ 5% ຂອງລາຍໄດ້ຂອງຜູ້ລະເມີດຈາກປີທີ່ຜ່ານມາ.

ກົດໝາຍທີ່ຈະມີຜົນບັງຄັບໃຊ້ໃນວັນທີ 1 ມັງກອນ 2026 ຍັງຫ້າມການນຳໃຊ້ຂໍ້ມູນສ່ວນບຸກຄົນໃນທາງທີ່ຜິດເພື່ອທຳລາຍຄວາມໝັ້ນຄົງຂອງຊາດ ຫຼື ຄວາມເປັນລະບຽບຮຽບຮ້ອຍຂອງປະຊາຊົນ, ຂັດຂວາງຄວາມພະຍາຍາມໃນການປົກປ້ອງຂໍ້ມູນ, ນຳໃຊ້ປະໂຫຍດຈາກການຄຸ້ມຄອງຂໍ້ມູນເພື່ອຈຸດປະສົງທີ່ຜິດກົດໝາຍ, ເກັບກຳ ຫຼື ແບ່ງປັນຂໍ້ມູນຢ່າງຜິດກົດໝາຍ, ອະນຸຍາດໃຫ້ຜູ້ອື່ນນຳໃຊ້ຂໍ້ມູນໃນທາງທີ່ຜິດຫຼືເຈດຕະນາຮົ່ວໄຫຼ, ສູນເສຍ ຫຼື ຍຶດຂໍ້ມູນສ່ວນບຸກຄົນ.

ໃນວັນດຽວກັນ, ສະພາແຫ່ງຊາດ ໄດ້ມີມະຕິຍົກເວັ້ນຄ່າຮຽນສຳລັບນັກຮຽນໂຮງຮຽນຂອງລັດໃນທົ່ວປະເທດເລີ່ມແຕ່ເດືອນກັນຍາປີນີ້ເປັນຕົ້ນໄປ; ນະໂຍບາຍນີ້ຈະກວມເອົາເດັກນ້ອຍກ່ອນໄວຮຽນອາຍຸສາມເດືອນຫາຫົກປີ, ເຊັ່ນດຽວກັນກັບນັກຮຽນໃນຊັ້ນຮຽນປີທີ 1 ຫາ 12.

ຈະມີການອຸດໜູນຄ່າຮຽນແກ່ນັກຮຽນທີ່ເຂົ້າຮຽນໃນໂຮງຮຽນເອກະຊົນອີກດ້ວຍ.

ປັດຈຸບັນ, ຫວຽດນາມມີເດັກນ້ອຍກ່ອນໄວຮຽນ ແລະ ນັກຮຽນສາມັນສຶກສາ ປະມານ 23 ລ້ານຄົນ.

ລັດຖະມົນຕີກະຊວງສຶກສາທິການ ແລະ ການເຝິກອົບຮົມ ຫງວຽນ ກິມ ເຊີນ (Nguyen Kim Son) ໃຫ້ຮູ້ວ່າ: ລັດຖະບານຄາດວ່າຈະຈັດສັນງົບປະມານປະມານ 30,600 ຕື້ດົງ (1,2ຕື້ໂດລາສະຫະລັດ) ສຳລັບສົກຮຽນ 2025-2026 ເພື່ອປະຕິບັດການຍົກເວັ້ນຄ່າຮຽນ.




# ດານມາກ ກຽມອອກກົດໝາຍປົກປ້ອງພາບ-ສຽງຂອງບຸກຄົນເພື່ອຕ້ານກັບ AI-deepfake




(New York Post) - ດານມາກ ຄາດວ່າຈະຜ່ານກົດໝາຍທີ່ໃຫ້ພົນລະເມືອງໄດ້ຮັບການປົກປ້ອງລິຂະສິດພາບ ແລະ ສຽງຂອງຕົນ ເພື່ອຕໍ່ສູ້ກັບກະແສນິຍົມທີ່ເພີ່ມຂຶ້ນຂອງການປອມແປງແບບເລິກແລບ (deepfake ດີບເຟກ) ທີ່ສ້າງຂຶ້ນໂດຍປັນຍາປະດິດ ຫຼື ເອໄອ (artificial intelligence - AI).

ເມື່ອວັນພະຫັດທີ 26 ມິຖຸນາຜ່ານມາ, ສະມາຊິກລັດຖະສະພາຈາກຫຼາຍພັກການເມືອງໄດ້ຮ່ວມກັນລົງຄະແນນສຽງຜ່ານການປັບປຸງກົດໝາຍລິຂະສິດສະບັບປັດຈຸບັນ ທີ່ເພີ່ມທະວີການປົກປ້ອງພົນລະເມືອງຈາກການນຳໃຊ້ເທັກໂນໂລຊີ AI ໃນການປອມແປງພາບ ແລະ ສຽງ ເຊິ່ງກົດໝາຍໄດ້ນິຍາມເຕັກໂນໂລຊີປັນຍາປະດິດ "ດີບເຟກ" ວ່າເປັນການນຳສະເໜີພາບ ແລະ ສຽງຂອງບຸກຄົນ ໃນຮູບແບບສົມຈິງເກີນຈິງ (hyper-realistic) ຈົນຍາກທີ່ຈະຈຳແນກໄດ້ວ່າມັນເປັນຂອງແທ້ ຫຼື ປອມ.

ຢາຄ໊ອບ ເອງເງິນ-ຊະມິດ (Jakob Engel-Schmidt) ລັດຖະມົນຕີກະຊວງວັດທະນະທຳກ່າວວ່າ: ໃນຮ່າງກົດໝາຍທີ່ພວກເຮົາຕົກລົງເຫັນດີແລະກຳລັງສົ່ງສານທີ່ຈະແຈ້ງວ່າ ທຸກຄົນມີສິດຕໍ່ຮ່າງກາຍ, ສຽງ ແລະລັກສະນະໃບໜ້າຂອງຕົນເອງ ເຊິ່ງເຫັນໄດ້ແຈ້ງວ່າກົດໝາຍສະບັບປັດຈຸບັນ ຍັງບໍ່ສາມາດປົກປ້ອງຜູ້ຄົນຈາກການສ້າງຂຶ້ນໂດຍເຕັກໂນໂລຊີ AI; ລັດຖະມົນຕີກ່າວຕື່ມວ່າ "ຂ້າພະເຈົ້າບໍ່ເຕັມໃຈທີ່ຈະຍອມຮັບການທີ່ມະນຸດສາມາດຖືກນຳໄປຜ່ານເຄື່ອງຈັກສຳເນົາດິຈິຕອນ ແລະ ຖືກນຳໄປໃຊ້ໃນທາງທີ່ຜິດໄດ້ທຸກຮູບແບບ.

ການເຄື່ອນໄຫວທາງກົດໝາຍນີ້ ມີຈຸດປະສົງເພື່ອໃຫ້ຊາວດານມາກມີສິດອຳນາດທາງກົດໝາຍເພື່ອຮຽກຮ້ອງໃຫ້ເວທີອອນລາຍລຶບເນື້ອຫາທີ່ສ້າງໂດຍ AI ທີ່ສະແດງພາບຂອງພວກເຂົາໂດຍບໍ່ໄດ້ຮັບການຍິນຍອມເຫັນດີ.

ກົດໝາຍດັ່ງກ່າວຍັງຈະກວມເອົາ "ການລອກແບບການສະແດງຂອງສິລະປິນແຕ່ລະຄົນທີ່ສ້າງຂຶ້ນດ້ວຍລະບົບດິຈິຕອນຢ່າງສົມຈິງ" ເຊິ່ງໝາຍຄວາມວ່າກົດໝາຍນີ້ ບໍ່ພຽງແຕ່ປົກປ້ອງຮູບຮ່າງໜ້າຕາ ແລະ ສຽງຂອງບຸກຄົນທົ່ວໄປ, ແຕ່ຍັງປົກປ້ອງການສະແດງທີ່ເປັນເອກະລັກຂອງສິລະປິນເຊັ່ນ: ການຮ້ອງເພງ, ການເຕັ້ນ, ການສະແດງດົນຕີ ຫຼື ການສະແດງອື່ນໆ.

ແນວໃດກໍຕາມ, ເຈົ້າໜ້າທີ່ລັດຖະບານກ່າວວ່າ ກົດໝາຍນີ້ ຈະຍັງມີຂໍ້ຍົກເວັ້ນແນວຄິດສຳລັບການສ້າງຜົນງານເຍາະເຍີ້ຍ ແລະ ສຽດສີ. ເຈົ້າໜ້າທີ່ກ່າວວ່າ ເວທີເຕັກໂນໂລຊີຕ່າງໆທີ່ບໍ່ປະຕິບັດຕາມ ຈະຖືກ "ປັບໃໝຢ່າງຮ້າຍແຮງ" ຫຼັງຈາກກົດໝາຍມີຜົນບັງຄັບໃຊ້, ເຊິ່ງຄາດວ່າຈະເລີ່ມຕົ້ນໃນລະດູໃບໄມ້ລົ່ນທີ່ຈະເຖິງນີ້.

ໝາຍເຫດ: deepfake ເປັນຄຳທີ່ມາຈາກພາສາອັງກິດ, ໃນພາສາລາວສາມາດແປວ່າ ວິດີໂອປອມຫຼືຮູບພາບປອມແບບເລິກແລບ; ບາງຄັ້ງກໍອາດເອີ້ນວ່າ: "ການປອມແປງເຕັກນິກສູງ", "ເຕັກໂນໂລຊີຕົວປະພຶດປອມ"

ອະທິບາຍເພີ່ມຕື່ມ: deepfake ໝາຍເຖິງການໃຊ້ AI ປະມວນຮູບພາບ ຫຼື ສຽງໃຫ້ຄ້າຍຄືຄົນຈິງ, ເຊິ່ງອາດນຳໃຊ້ເພື່ອຈຸດປະສົງທີ່ບໍ່ດີ.

ຄຳວ່າ "deepfake" ຍັງບໍ່ມີຄຳແປທາງການໃນລາວ; ສະນັ້ນ, ສ່ວນຫຼາຍຈະໃຊ້ຄຳດັ້ງເດີມ ຫຼື ອະທິບາຍເປັນປະໂຫຍກ.

ເຝົ້າເວົ້າ ໄດ້ຂີດຂຽນ

❖ ວິເສດ ສະແຫວງສຶກສາ

# ນະໂຍບາຍສ້າງແຮງງານຄຸນນະພາບ ແລະ ການພັດທະນາຊົນນະບົດຮອບດ້ານ



ບົດຮຽນຈາກຕ່າງປະເທດທີ່ສັນຫາມາເລົ່າໃນບົດນີ້ ລວມມີນະໂຍບາຍຂອງຫວຽດນາມ ໃນການສ້າງແຮງງານຄຸນນະພາບ ດ້ວຍການສຶກສາທີ່ມີຄຸນນະພາບ ແລະ ເລື່ອງກ່ຽວກັບການພັດທະນາຊົນນະບົດຮອບດ້ານຢູ່ ສປ ຈີນ.

ສຳລັບຢູ່ຫວຽດນາມ ຫຼາຍທ່ານອາດຮູ້ດີວ່າໃນຊຸມປີຫຼັງໆມານີ້ ທາງການຂອງປະເທດນີ້ໄດ້ເນັ້ນການສຶກສາ ເພື່ອສ້າງແຮງງານຄຸນນະພາບ ສຳລັບການພັດທະນາຫວຽດນາມ ໃຫ້ກາຍເປັນປະເທດອຸດສາຫະກຳ ພາຍໃນປີ 2020 ແລະ ກໍສຳເລັດຕາມເປົ້າໝາຍໄປແລ້ວ; ເມື່ອເປົ້າໝາຍດັ່ງກ່າວ, ການສຶກສາໄດ້ເນັ້ນວິຊາທີ່ຈຳເປັນເຊັ່ນ ວິຊາວິທະຍາສາດ-ເຕັກໂນໂລຊີທົ່ວໄປ, ເຕັກໂນໂລຊີອຸດສາຫະກຳ, ກົດໝາຍລະຫວ່າງປະເທດ, ຄວາມຮູ້ກ່ຽວກັບການດຳເນີນທຸລະກິດ-ການຄ້າ. ນອກຈາກເພື່ອນຳໃຊ້ແຮງງານຄຸນນະພາບຢູ່ພາຍໃນປະເທດແລ້ວ, ຫວຽດນາມ ຍັງມີເປົ້າໝາຍສົ່ງອອກແຮງງານຄຸນນະພາບນີ້ ເພື່ອຍາດແຍ່ງສ່ວນແບ່ງຂອງຕະຫຼາດແຮງງານໃນພາກພື້ນ ແລະ ສາກົນ ນຳອີກ. ການສົ່ງແຮງງານຊຳນານງານ ອອກໄປຕ່າງປະເທດນັ້ນ ຈະຊ່ວຍໃຫ້ໄດ້ຮັບເງິນຄ່າຈ້າງສູງ ແລະ ທັງຈະໄດ້ຄວາມຮູ້ທີ່ຈຳເປັນເພີ່ມໃນບ່ອນທີ່ອອກແຮງງານ ເວົ້າລວມແລ້ວໃນໄລຍະຫຼັງໆມານີ້ ຫວຽດນາມສາມາດຫຼຸດຜ່ອນ ແລະ ຢຸດການສົ່ງອອກແຮງງານດິບສູ່ຕະຫຼາດພາຍນອກ, ເປົ້າໝາຍສ້າງຫວຽດນາມ ໃຫ້ເປັນປະເທດອຸດສາຫະກຳນັ້ນບັນລຸຜົນຕາມຄາດໝາຍຍ້ອນວ່າຫວຽດນາມມີກຳລັງປິ່ມຊ້ອນດ້ານແຮງງານຢ່າງພຽງພໍຄືມີກຳລັງແຮງຊາວໜຸ່ມໃນໄວອອກແຮງງານ (ໂດຍສະເລ່ຍ 26 ປີ) ທີ່ກວມເອົາເກືອບ 60% ຂອງແຮງງານທັງໝົດ ແລະ ມີອັດຕາການອ່ານອອກຂຽນເປັນ (ຮູ້ໜັງສື) ທີ່ກວມເອົາກວ່າ 90% ຂອງຈຳນວນພົນລະເມືອງທັງໝົດຂອງປະເທດ.

ຕໍ່ໄປແມ່ນເລື່ອງກ່ຽວກັບການພັດທະນາຊົນນະບົດຮອບດ້ານ ຢູ່ ສປຈີນ ທີ່ມີ 4 ຄາດໝາຍລວມເປັນບ່ອນອີງຄື: 1.ຄາດໝາຍລວມ, 2. ຄວາມຮັບຜິດຊອບຕົ້ນຕໍຂອງຄະນະພັກ ແລະ ອົງການປົກຄອງທຸກຂັ້ນ, 3. ການຄຸ້ມຄອງ ແລະ 4. ການຊີ້ນຳ. ສຳລັບຄາດໝາຍທີ 1 ນັ້ນແມ່ນເນັ້ນ ການກຳນົດຈຸດສຳຄັນທີ່ຕ້ອງພັດທະນາໃນທ້ອງຖິ່ນ, ການນຳໃຊ້ບຸກຄະລາກອນທີ່ມີຄວາມຮູ້, ການສົມທົບວຽກພັດທະນາເຂົ້າກັບວຽກວັດທະນະທຳ, ການຮັກສາສິ່ງແວດລ້ອມ ແລະ ວຽກການຈັດຕັ້ງ. ສຳລັບຄາດໝາຍທີ 2 ນັ້ນ ແມ່ນຍົກສູງບົດບາດການຊີ້ນຳກຳແໜ້ນໜ້າທີ່ລວມ, ການປະສານງານເປັນເອກະພາບຂອງທຸກພາກສ່ວນ. ສຳລັບຄາດໝາຍທີ 3 ແມ່ນເນັ້ນເຮັດໃຫ້ການຄຸ້ມຄອງມີຄວາມເຄັ່ງຄັດຮັດກຸມ ຖືເອົາຄຸນນະພາບເໜືອກວ່າປະລິມານ, ຫຼີກລ່ຽງພະຍາດຮີບຮ້ອນແບບຈຸດໄລຍະ, ຕ້ານພະຍາດເອົາແຕ່ຮູບການ-ເອົາແຕ່ໜ້າ ແລະ ລັດທິອາດຍາສິດ, ເອົາການປະຕິບັດໜ້າທີ່ຕົວຈິງ ເປັນໄມ້ຫຼາວັດແທກຄວາມສາມາດ ແລະ ຜົນສຳເລັດ. ສຳລັບການຊີ້ນຳທີ່ເປັນຄາດໝາຍໂຕທີ 4 ນັ້ນ ແມ່ນເນັ້ນການນຳພາທີ່ເປັນເອກະພາບຂອງຄະນະພັກ, ອົງການປົກຄອງ ແລະ ການປະສານງານຂອງບັນດາຫົວໜ່ວຍພັດທະນາຊົນນະບົດ ແລະ ການມີສ່ວນຮ່ວມຈາກທົ່ວສັງຄົມ.

ທະນາຄານພັດທະນາລາວ
LDB Bank

ຮຽນພາສາ ຜ່ານສຽງຫົວ



## ນັກສືບ

#ບ່າວກະບື

"ໂຕຮູ້ບໍ່ວ່າ ບັກ ສະມັດ ມັນເປັນນັກສືບແບບໃດກັບຫວະ?"

" ເອີ... ມີຄັ້ງໜຶ່ງ ໂຈນໃສ່ຖົງມືໜັງລູກງົວນ້ອຍ ບຸກເຂົ້າລັກເງິນໃນຕູ້ເຊັບ. ບັກສະມັດ ມັນພິສູດຮອຍມືໂຈນໄດ້ ແລະ ຫ້າມື້ຕໍ່ມາ ມັນກໍຈັບງົວແມ່ໂຕໜຶ່ງໄດ້"

#BAOKBU

"Do you know what kind of detective is Samad?"

"Well. once a burglar wearing calfskingloves, robbed a safe. Samad took the fingerprints and five days later, arrested a cow".

ຕາມພາສາ ກາຕູນ




● ໂດຍ : ພູຜາ




## ກອງປະຊຸມ...

(ຕໍ່ຈາກໜ້າ 1)

ໄຟລາວ-ຈີນບໍ່ພຽງແຕ່ເປັນເສັ້ນທາງຍຸດທະສາດທີ່ເຊື່ອມຕໍ່ລະຫວ່າງ ສປປລາວ ແລະ ສປຈີນ ເທົ່ານັ້ນ, ແຕ່ຍັງເປັນເສັ້ນທາງທີ່ເຊື່ອມຕໍ່ ສປປລາວ ກັບໂລກພາຍນອກ ໂດຍຜ່ານ ສປຈີນ." ເພື່ອຢືນຢັນເຖິງຄວາມສຳຄັນຂອງໂຄງການນີ້, ທ່ານໄດ້ກ່າວເຖິງຄຳເວົ້າຂອງທ່ານເລຂາທິການໃຫຍ່, ປະທານປະເທດທອງລຸນ ສີສຸລິດທີ່ກ່າວວ່າ "ເສັ້ນທາງລົດໄຟ ລາວ-ຈີນ ເປັນເສັ້ນທາງທີ່ເຮັດໃຫ້ ສປປລາວ ກ້າວເຂົ້າສູ່ສັດຕະວັດທີ 21" ພ້ອມກັນນີ້, ທ່ານຍັງໄດ້ຍົກຄຳເວົ້າຂອງທ່ານ ສີ ຈິ້ນຜິງ ກ່າວໃນພິທີເປີດເສັ້ນທາງລົດໄຟ ລາວ-ຈີນ ທີ່ວ່າ "ການກໍ່ສ້າງເສັ້ນທາງລົດໄຟ ລາວ-ຈີນ ສຳເລັດ ພູກໍຈະບໍ່ສູງ ເສັ້ນທາງກໍຈະບໍ່ຍາວໄກ."

**ຜູ້ຊີ້ນຳ**
ທ່ານ ສິງຄຳ ວົງພະຈັນ

**ຄະນະຊ່ຽວຊານທີ່ປຶກສາ**
ທ່ານ ສີສຜັນ ແສງສະຫວັນ
ທ່ານ ວິເສດ ສະແຫວງສຶກສາ
ທ່ານ ທອງດາ ສຸພາສິດ

**ຄະນະບັນນາທິການ**
ທ່ານ ປອ. ພິດສະໄໝ ບຸນວິໄລ ຫົວໜ້າ ບກ
ທ່ານ ວິລະພັດ ພາບວິໄຊ ຮອງຫົວໜ້າ ບກ
ທ່ານ ບຸນເກີດ ວົງໄຊຍາ ຮອງຫົວໜ້າ ບກ
ທ່ານ ແກ້ວລະກາ ຊ້ອຍໄຊຍະ ຮອງຫົວໜ້າ ບກ

**ກອງບັນນາທິການ**
ທ່ານ ນາງ ວັນນາລິນ ສຸລິວົງສັກ
ທ່ານ ນາງ ໄຊໂສພາພອນ ມິ່ງມຸງຄຸນ
ທ່ານ ນາງ ສຸພາວັນ ຫອມສະນິດ
ທ່ານ ນາງ ອາລິນ ສຸພົມມະປະດິດ

**ອອກແບບ - ຈັດໜ້າ**
ທ່ານ ນາງ ກຸກກິກ ບຸດດາໄຊ

**ຮູບພາບປະກອບ**
ທ່ານ ສອນສັກ ວັນວິໄຊ